ອົງການກາແດງລາວ

# ແຜນຍຸດທະສາດ 2011-2015



*ການປ່ຽນແປງທັດສະນະຄະຕິ ເພື່ອຊີວິດທີ່ປອດໄພ*

ພຶດສະພາ 2011, ສປປ ລາວ



# ຄຳນຳ

ອົງການກາແດງລາວ ແມ່ນອົງການນຳໜ້າດ້ານວຽກງານມະນຸດສະທຳໃນ ສປປ ລາວ ແລະເຮັດໜ້າທີ່ຢ່າງຕັ້ງໜ້າໃນການຄຸ້ມຄອງໄພພິບັດ, ບໍລິການເລືອດທີ່ປອດໄພ, ສົ່ງເສີມສຸຂະ ພາບຊຸມຊົນ ແລະ ໂຄສະນາຫລັກການພື້ນຖານ-ຄຸນຄ່າດ້ານມະນຸດສະທຳ. ມີພາລະກິດໃນການ ສະໜັບສະໜູນ ຊ່ວຍເຫລືອປະຊາຊົນຜູ້ທີ່ສ່ຽງໄພສູງໃຫ້ທ່ວງທັນເວລາ ຕາມຄວາມຮຽກຮ້ອງຕ້ອງ ການຂອງເຂົາເຈົ້າ, ໂດຍການປັບປຸງດ້ານສຸຂະພາບ ແລະ ຊີວິດການເປັນຢູ່ ແລະ ຊ່ວຍເຫລືອເຂົາເຈົ້າໃນການທ້າງທາກະກຽມ ສຳລັບການຕອບໂຕ້ຕໍ່ກັບໄພພິບັດ ຕາມຫລັກການພື້ນຖານຂອງຂະບວນການກາແດງ ແລະ ຊີກວົງເດືອນແດງສາກົນ.

ແຜນການດັ່ງກ່າວນີ້ ແມ່ນແຜນຍຸດທະສາດ 5 ປີ ຄັ້ງທີ່ສາມຂອງອົງການກາແດງລາວ. ຂອບເຂດເວລາສຳລັບແຜນຍຸດທະສາດໃໝ່ນີ້ ນັບແຕ່ປີ 2011-2015. ແຜນຍຸດທະສາດນີ້ໄດ້ພັດທະນາຂື້ນໂດຍຜ່ານການຖອດຖອນບົດຮຽນ, ຈາກການຈັດຕັ້ງປະຕິບັດແຜນຍຸດທະສາດ ຄັ້ງທີ່ສອງ ປີ 2006-2010, ແຜນການດັ່ງກ່າວນີ້ ແທດເໝາະກັບສະພາບການຕົວຈິງໃນປະຈຸບັນ ແລະ ໄດ້ຜ່ານຂະບວນການປຶກສາຫາລືຢ່າງກວ້າງຂວາງ, ເຊິ່ງໄດ້ວາງທິດທາງສຳລັບອົງການກາແດງລາວ ເພື່ອສືບຕໍ່ສ້າງຄວາມເຂັ້ມແຂງໃນສີ່ຂົງເຂດວຽກງານຫຼັກ ຄື: ການຄູ້ມຄອງໄພພິບັດ, ການສົ່ງເສີມສຸຂະພາບຊຸມຊົນ, ການສົ່ງເສີມຫລັກການພື້ນຖານ-ຄຸນຄ່າມະນຸດສະທຳ ແລະ ການພັດທະນາອົງການ.

ອົງການກາແດງລາວມີຄວາມເຊື່ອໝັ້ນວ່າ ຈະສືບຕໍ່ເປັນອົງການທີ່ນຳໜ້າດ້ານມະນຸດສະທຳ ໃນ ສປປ ລາວ ແລະ ເປັນຜູ້ປະກອບສ່ວນຢ່າງຕັ້ງໜ້າເພື່ອໃຫ້ບັນລຸຜົນສຳເລັດໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະບານ ສປປ ລາວ ຄັ້ງທີ 7 (2011-2015), ຍຸດທະສາດ ແລະ ແຜນງານສຳລັບການເຊື່ອມສານແຜນນະໂຍບາຍຕໍ່ກັບການບໍລິການສາທາລະນະສຸກສຳລັບແມ່, ເດັກນ້ອຍເກີດໃໝ່ ແລະ ເດັກ (2009-2015) ແລະ ແຜນພັດທະນາຂະແໜງສາທາລະນະສຸກ 5 ປີ ຄັ້ງທີ 7 (2011-2015) ແລະ ເປົ້າໝາຍສະຫະສະວັດດ້ານການພັດທະນາຂອງອົງການສະຫະປະຊາຊາດ (MDGs).

ດ້ວຍຄວາມຕັດສິນໃຈສູງຂອງການນຳ, ພະນັກງານຂອງອົງການການກາແດງລາວທຸກຂັ້ນ ສົມທົບກັບຄວາມຈິງໃຈໃນການສະໜັບສະໜູນຈາກບັນດາກາແດງເພື່ອນມິດ, ສະຫະພັນກາແດງ, ຄະນະກຳມະການກາແດງສາກົນ, ການຈັດຕັ້ງພາກລັດ-ເອກະຊົນ, ອົງການສະຫະປະຊາຊາດ ແລະ ອົງການຈັດຕັ້ງສາກົນຕ່າງໆ, ອົງການກາແດງລາວມີຄວາມເຊື່ອໝັ້ນວ່າ ຈະບັນລຸຈຸດປະສົງ, ເປົ້າໝາຍ ແລະ ຄາດຄະເນຜົນໄດ້ຮັບທີ່ວາງໄວ້ ພາຍໃນປີ 2015. ເຖິງຢ່າງໃດກໍ່ຕາມຜົນສຳເລັດ

ຂອງການຈັດຕັ້ງປະຕິບັດແຜນຍຸດທະສາດສະບັບນີ້, ແມ່ນຂຶ້ນກັບການປະກອບສ່ວນຢ່າງຕັ້ງໜ້າ ແລະ ເປັນເຈົ້າການ ຂອງການນຳ, ພະນັກງານ ແລະ ອາສາສະໝັກກາແດງລາວໃນທຸກຂັ້ນ ເພື່ອຮັບປະກັນການພັດທະນາແບບຍືນຍົງ ໂດຍສົມທົບກັບ ການສະໜັບສະໜູນທາງດ້ານຊັບພະຍາກອນທີ່ພຽງພໍ ແລະ ການຮ່ວມມື ຂອງບັນດາຄູ່ຮ່ວມງານທັງພາຍໃນ ແລະ ຕ່າງປະເທດ.

ພວກເຮົາຂໍສະແດງຄວາມຮູ້ບຸນຄຸນ ແລະ ຂອບໃຈມາຍັງການນຳ, ພະນັກງານກາແດງລາວທັງໝົດ, ສະຫະພັນກາແດງ, ຄະນະກຳມະການກາແດງສາກົນ ແລະ ບັນດາກາແດງຄູ່ຮ່ວມງານທີ່ໄດ້ໃຫ້ ຄຳປຶກສາຫາລື, ຄຳຄິດຄຳເຫັນທີ່ສ້າງສັນເຂົ້າໃນການສ້າງແຜນຍຸດທະສາດສະບັບນີ້.

ພວກເຮົາຫວັງຢ່າງຍິ່ງວ່າຈະໄດ້ຮັບການຮ່ວມມື ແລະ ສະໜັບສະໜູນ ຈາກຄູ່ຮ່ວມງານ ຂອງພວກເຮົາທັງໝົດນັບທັງໃນໄລຍະຜ່ານມາ, ປະຈຸບັນ ແລະ ສືບຕໍ່ໃນອານາຄົດ ເພື່ອໃຫ້ແຜນຍຸດທະສາດສະບັບນີ້ ໄດ້ຮັບການຈັດຕັ້ງປະຕິບັດດ້ວຍຜົນສຳເລັດທີ່ມີປະສິດທິພາບ ແລະ ປະສິດທິຜົນສູງ.

ນະຄອນຫຼວງວຽງຈັນ, ວັນທີ 31 ພຶດສະພາ, 2011

ອົງການກາແດງລາວ

| | |
|---|---|
| ດຣ. ສມິວຸຣັຊ ສຣະມານີ | ດຣ. ກິແດງ ທຳມະລັງສີ |
| ປະທານ ອົງການກາແດງລາວ | ເລຂາທິການໃຫ່ຍ ອົງການກາແດງລາວ |

สาละบาน 2

พาภสะเໜີ 4

พาภທີ I. : ອົງການກາແດງລາວ

ອົງການນຳໜ້າດ້ານວຽກງານມະນຸດສະທຳ 6

ທ່າອ່ຽງໃນອະນາຄົດ 7

ພາກທີ II. : ອົງການກາແດງລາວໃນອານາຄົດ

ສິ່ງທ້າທາຍໃນອານາຄົດ 8

ທົບທວນຄືນ ວິໄສທັດ ແລະ ພາລະກິດ ສຳລັບ 2011-2015 12

ພາກທີ III. : ວຽກງານຂອງອົງການກາແດງລາວທີ່ຈະເຮັດໃນອານາຄົດ

ຂົງເຂດວຽກງານຫລັກ ທີ 1: ຄຸ້ມຄອງ ໄພພິບັດ 15

ຂົງເຂດວຽກງານຫລັກ ທີ 2: ສົ່ງເສີມສຸຂະພາບຊຸມຊົນ 17

ຂົງເຂດວຽກງານຫລັກ ທີ 3: ສົ່ງເສີມຫລັກການ ແລະ ຄຸນຄ່າມະນຸດສະທຳ 21

ຂົງເຂດວຽກງານຫລັກ ທີ 4: ພັດທະນາແລະສ້າງຄວາມເຂັ້ມແຂງໃຫ້ກາແດງ ແຫ່ງຊາດ 24

ພາກສະຫຼຸບ 30

ແຜນວາດຍຸດທະສາດ ຂອງອົງການກາແດງລາວ (2011-2015) 32

ຄຳຫຍໍ້ 33

ເອກະສານອ້າງອີງ 34

ອະທິບາຍຄຳສັບ 35

ຫລັກການ ແລະຄຸນຄ່າຂອງພວກເຮົາ 37

# ພາກສະເໜີ

ແຜນຍຸດທະສາດຂອງອົງການກາແດງລາວຄັ້ງທີ່ 3 (2011-2015) ສະບັບນີ້ ແມ່ນຖືກສ້າງຂຶ້ນ ບົນພື້ນຖານປະສົບການ, ຄວາມຄືບໜ້າ ແລະ ຜົນສຳເລັດຂອງແຜນຍຸດທະສາດ ຄັ້ງທີ 2 (2006-2010), ຊຶ່ງເປັນຂໍ້ມູນພື້ນຖານໃຫ້ແກ່ການກຳນົດທິດທາງຍຸດທະສາດ ໃນອີກ 5 ປີ ຂ້າງໜ້າ, ໂດຍໄດ້ຮັບການປຶກສາຫາລື ແລະ ປະກອບຄຳຄິດຄຳເຫັນຢ່າງກວ້າງຂວາງ ຈາກໜ່ວຍງານທີ່ກ່ຽວຂ້ອງ. ແຜນຍຸດທະສາດດັ່ງກ່າວໄດ້ຖືກຜັນຂະຫຍາຍ ໃຫ້ແທດເໝາະຕາມແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະບານ ຄັ້ງທີ 7, ຍຸດທະສາດ ແລະ ແຜນງານສຳລັບການເຊື່ອມສານແຜນນະໂຍບາຍຕໍ່ກັບການບໍລິການສາທາລະນະສຸກສຳລັບແມ່, ເດັກນ້ອຍເກີດໃໝ່ ແລະ ເດັກ (2009-2015) ແລະ ແຜນພັດທະນາຂະແໜງສາທາລະນະສຸກ 5 ປີ ຄັ້ງທີ 7 (2011-2015), ເປົ້າໝາຍສະຫະສະວັດແຫ່ງການພັດທະນາຂອງອົງການສະຫະປະຊາຊາດ ແລະ ທິດທາງຍຸດທະສາດ ຂອງສະຫະພັນກາແດງ ທີ່ເວົ້າວ່າ: "ທຸກຂົງເຂດວຽກງານຫຼັກ ຂອງກາແດງແຫ່ງຊາດ ແມ່ນແນໃສ່ຕອບສະໜອງຄວາມຮຽກຮ້ອງຕ້ອງການ ທາງດ້ານຜົນປະໂຫຍດສູງສຸດຂອງຜູ້ດ້ອຍໂອກາດ".

ເພາະສະນັ້ນ, ແຜນຍຸດທະສາດສະບັບນີ້ ແມ່ນຖືກຜັນຂະຫຍາຍເພື່ອໃຫ້ສອດຄ່ອງກັບ ວິໄສທັດ ແລະ ຍຸດທະສາດລວມ ປີ 2020 ຂອງສະຫະພັນກາແດງ, ບົນພື້ນຖານດັ່ງກ່າວນີ້ ອົງການກາແດງລາວ ຕ້ອງໄດ້ສືບຕໍ່ສ້າງແຜນຍຸດທະສາດຂອງຕົນເອງ ສຳລັບປີ 2016-2020.

**"ແຜນຍຸດທະສາດ ອົງການກາແດງລາວ** ***2011-2015: ການປຸ່ງນແປງທັດສະນະຄະຕິ" ເພື່ອຊີວິດທີ່ປອດໄພ,*** ແມ່ນຜົນສຳເລັດຂອງການປຶກສາຫາລື ແລະ ປະກອບຄຳຄິດຄຳເຫັນຢ່າງກວ້າງຂວາງ ຂອງບັນດາຄູ່ຮ່ວມງານທີ່ກ່ຽວຂ້ອງ. ຊຶ່ງໄດ້ແບ່ງອອກເປັນ 3 ພາກ ດັ່ງລຸ່ມນີ້:

**ພາກທີ ໜຶ່ງ: ບັນລະຍາຍກ່ຽວກັບ ອົງການກາແດງລາວ** ແມ່ນອົງການທີ່ນຳໜ້າທາງດ້ານມະນຸດສະທຳ, ພາລະບົດບາດ ແລະ ທ່າອຽງໃນອານາຄົດ.

**ພາກທີ ສອງ : ບັນລະຍາຍກ່ຽວກັບ ຄວາມມຸ້ງຫວັງຂອງກາແດງລາວໃນອານາຄົດ: ສິ່ງທ້າທາຍ ແລະ ແນວທາງປະຕິບັດ ເພື່ອຈະບັນລຸເຖິງວິໄສທັດ ແລະ ພາລະກິດ ໃນອີກ 5 ປີ ຂ້າງໜ້າ. .**

**ພາກທີ ສາມ: ບັນລະຍາຍກ່ຽວກັບ ທິດທາງຍຸດທະສາດ** ແລະ ກຳນົດ ບັນດາ 4 ຂົງເຂດວຽກງານ ທີ່ກາແດງລາວ ຕ້ອງໄດ້ສຸມໃສ່:

1. **ການຄຸ້ມຄອງໄພພິບັດ**
2. **ການສົ່ງເສີມສຸຂະພາບຊຸມຊົນ**
3. **ການສົ່ງເສີມຫລັກການ ແລະ ຄຸນຄ່າມະນຸດສະທຳ**
4. **ການພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ອົງການກາແດງລາວ ໃຫ້ເປັນກາແດງແຫ່ງຊາດທີ່ເຄື່ອນໄຫວໄດ້ດີ.**

# ພາກທີ I:

# ອົງການນຳໜ້າດ້ານວຽກງານມະນຸດສະທຳ, ທ່າອ່ຽງໃນອານາຄົດ

ອົງການກາແດງລາວ ແມ່ນອົງການຈັດຕັ້ງທາງສັງຄົມ ເຊິ່ງຮັບຮູ້ໂດຍລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ. ໃນໄລຍະ 55 ປີແຫ່ງການຄົງຕົວຂອງຕົນ, ອົງການກາແດງລາວໄດ້ພັດທະນາຕົນເອງ ໃຫ້ເປັນອົງການທີ່ນຳໜ້າທາງດ້ານມະນຸດສະທຳ ໃນ ສປປ ລາວ. ໃນໄລຍະຊຸມປີທີ່ຜ່ານມາ, ອົງການກາແດງລາວ ໄດ້ຮັບການເຊື່ອຖືໃນໜ້າທີ່ວຽກງານ ແລະ ການບໍລິການ.

## ນຳໜ້າໃນວຽກງານດ້ານມະນຸດສະທຳ

ອົງການກາແດງລາວໄດ້ສ້າງຕັ້ງຂຶ້ນໃນ ວັນທີ 01 ມັງກອນ ປີ1955 ແລະ ຖືກຮັບຮອງໂດຍຄະນະກຳມະການກາແດງສາກົນ ໃນວັນທີ 23 ພຶດສະພາ ປີ 1957 ແລະ ຫຼັງຈາກນັ້ນ ໄດ້ຖືກຮັບຮອງຈາກ ສະຫະພັນກາແດງ ແລະ ຊີກວົງເດືອນແດງສາກົນ ໃນວັນທີ 25 ຕຸລາ 1957.

ນັບຕັ້ງແຕ່ນັ້ນມາອົງການກາແດງລາວ ໄດ້ຜ່ານການພັດທະນາຂຶ້ນມາຕາມລຳດັບທີ່ແຕກຕ່າງກັນ, ເລີ້ມຈາກຂຶ້ນກັບກະຊວງສາທາລະນະສຸກ ແລະ ກະຊວງສະຫວັດດີການສັງຄົມ ກ່ອນຈະແຍກເປັນອົງການເອກະລາດ ຕາມດຳລັດຂອງກົມການເມືອງສູນກາງພັກ ໃນວັນທີ 4 ເມສາ 1992, ໂດຍມີພາລະບົດບາດເປັນອົງການທີ່ນຳໜ້າ ໃນວຽກງານມະນຸດສະທຳ ແລະ ຊ່ວຍໜູນລັດຖະບານ. ອົງການກາແດງລາວໄດ້ພັດທະນາພາລະບົດບາດ ໂດຍຖືກຮັບຮອງຈາກລັດຖະບານຕາມ, ດຳລັດເລກທີ 188/ນຍ ລົງວັນທີ 30 ພະຈິກ 1993. ຫລັງຈາກນັ້ນ ໄດ້ສືບຕໍ່ປັບປຸງພາລະບົດບາດຂອງຕົນເອງ ໂດຍຖືກຮັບຮອງຈາກລັດຖະບານໃນດຳລັດ ເລກທີ 36/ນຍ ລົງວັນທີ 21 ເມສາ 1999.

ອົງການກາແດງລາວ ຍັງສືບຕໍ່ຢູ່ພາຍໃຕ້ການຊີ້ນຳຢ່າງໃກ້ຊິດຂອງລັດຖະບານ ໃນຖານະທີ່ເປັນອົງການທາງສັງຄົມທີ່ຊ່ວຍໜູນລັດຖະບານໃນວຽກງານມະນຸດສະທຳ. ລັດຖະບານຍັງສືບຕໍ່ໃຫ້ການປະກອບສ່ວນສະໜັບສະໜູນທາງດ້ານການຄຸ້ມຄອງ ແລະ ການບໍລິຫານ-ຈັດການ ກໍຄືດ້ານຊັບພະຍາກອນ ໃນທຸກລະດັບ. ອົງການກາແດງລາວ ໄດ້ຖືກຮັບຮູ້ໂດຍລັດຖະບານ ໃນຖານະເປັນອົງການນຳໜ້າທາງດ້ານມະນຸດສະທຳໃນ ສປປ ລາວ ແນໃສ່ຕອບສະໜອງຕາມຄວາມຕ້ອງການຂອງປະຊາຊົນຜູ້ດ້ອຍໂອກາດໃນຂອບເຂດທົ່ວປະເທດ ໂດຍຜ່ານການຈັດຕັ້ງປະຕິບັດບັນດາວຽກງານຫຼັກ ຢູ່ໃນລະດັບແຂວງ ແລະ ເມືອງ.

ຕໍ່ກັບພາລະບົດບາດທີ່ເຕີບໃຫຍ່ຂະຫຍາຍຕົວຂອງຕົນ ທາງດ້ານການຊ່ວຍໜູນລັດຖະບານ ໃນວຽກງານມະນຸດສະທຳ, ມີຄວາມຈຳເປັນຮີບດ່ວນໃນການເພີ່ມທະວີຄວາມຮ່ວມມື ທີ່ມີປະສິດທິພາບ ແລະ ປະສິດທິຜົນ ກັບບັນດາຄູ່ຮ່ວມງານເພື່ອຕອບສະໜອງ ຕາມຄວາມຮຽກຮ້ອງຕ້ອງການຂອງປະຊາຊົນຜູ້ດ້ອຍໂອກາດ ໂດຍຜ່ານການປະສານງານ, ລະດົມຊັບພະຍາກອນຢ່າງພຽງພໍ, ແນໃສ່ຈັດຕັ້ງປະຕິບັດກິດຈະກຳໃຫ້ຫຼາຍຂຶ້ນ ແລະ ສອດຄ່ອງກັບແຜນຍຸດທະສາດ ປີ 2020 ຂອງສະຫະພັນກາແດງ ແລະ ຊີກວົງເດືອນແດງສາກົນ.

## ທ່າອ່ຽງໃນອານາຄົດ.

ຄວາມຕ້ອງການນຳໃຊ້ຊັບພະຍາກອນທຳມະຊາດ ເພື່ອຕອບສະໜອງຄວາມຕ້ອງການ ໃຫ້ແກ່ການພັດທະນາທາງດ້ານເສດຖະກິດ ທີ່ມີລັກສະນະເປັນໂລກາພິວັດ ສູງກວ່າທີ່ເຄີຍເປັນມາກ່ອນ ອາດຈະມີຜົນກະທົບທີ່ອາດຈະເກີດຂຶ້ນ ຈາກການປ່ຽນແປງຂອງສະພາບພູມີອາກາດ ແລະ ພາວະໂລກຮ້ອນ. ການປ່ຽນແປງສະພາບພູມີອາກາດ ລົມທົບກັບວິກິດການເສດຖະກິດໂລກ ໄດ້ສົ່ງຜົນກະທົບຕໍ່ການຈະເລີນເຕີບໂຕດ້ານເສດຖະກິດພາຍໃນປະເທດ ຊຶ່ງສະແດງອອກຢ່າງຈະແຈ້ງຕໍ່ກັບການເພີ້ມຂື້ນຂອງລາຄາອາຫານ ແລະ ນ້ຳມັນເຊື້ອໄຟ. ສະພາບວິກິດການທາງດ້ານເສດຖະກິດ, ອາຫານ ແລະ ດິນຟ້າອາກາດ ມັກຈະສົ່ງຜົນສະທ້ອນໃຫ້ເກີດບັນຫາໃໝ່ຕາມມາອີກ, ໂດຍສະເພາະແມ່ນການປ່ຽນແປງສະພາບດິນຟ້າອາກາດ ບໍ່ພຽງເປັນອັນຕະລາຍຕໍ່ຊີວິດ ແລະ ການເປັນຢູ່ຂອງປະຊາຊົນເທົ່ານັ້ນ ແຕ່ຍັງມີການຄຸກຄາມ ເພື່ອໃຫ້ເກີດມີຊ່ອງຫວ່າງລະຫວ່າງຄວາມຮັ່ງມີ ແລະ ຄວາມທຸກຈົນຢ່າງຮຸນແຮງ ແລະ ເຮັດໃຫ້ເກີດມີຄວາມບໍ່ສະເໝີພາບ ໃນບົດບາດຍິງຊາຍ ໃນລະດັບພາກພື້ນ, ພະຍາດລະບາດທັງເກົ່າ ແລະ ໃໝ່ ໄດ້ສົ່ງຜົນສະທ້ອນທາງລົບຕໍ່ການພັດທະນາເສດຖະກິດ-ສັງຄົມ, ສາທາລະນະສຸກ ຢູ່ ສປປ ລາວ. ພ້ອມດຽວກັນນັ້ນ, ວິກິດການທາງດ້ານການເງິນໃນທົ່ວໂລກ ຍັງສົ່ງຜົນສະທ້ອນອັນບໍ່ດີຕໍ່ຫຼາຍໆປະເທດລວມທັງ ສປປ ລາວ, ຊຶ່ງເຮັດໃຫ້ມີຄວາມຫຍຸ້ງຍາກຫຼາຍຂື້ນຕໍ່ວຽກງານກາແດງ ໃນການຂໍການຊ່ວຍເຫຼືອ ແລະ ສະໜັບສະໜູນ ຈາກພາຍໃນ ແລະ ຕ່າງປະເທດ.

ເພາະສະນັ້ນ, ການປ່ຽນແປງຂອງດິນຟ້າອາກາດທີ່ນັບມື້ນັບເພີ່ມຂຶ້ນ ຈະສົ່ງຜົນກະທົບອັນບໍ່ດີຢ່າງໃຫຍ່ຫຼວງ ຕໍ່ ສປປ ລາວ ເຊັ່ນ: ໄພພິບັດທາງທຳມະຊາດ ແລະ ການລະບາດຂອງເຊື້ອພະຍາດ. ຕໍ່ສະພາບການດັ່ງກ່າວ, ໃນການຈັດຕັ້ງປະຕິບັດ ແຜນພັດທະນາດ້ານເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ່ 7 (2011-2015), ລັດຖະບານ ສປປ ລາວ ຈະປະເຊີນກັບບັນດາ ສິ່ງທີ່ທ້າທາຍ ຊຶ່ງອາດສົ່ງຜົນສະທ້ອນຕໍ່ການຈັດຕັ້ງປະຕິບັດ ວຽກງານມະນຸດສະທຳ ຂອງອົງການກາແດງລາວເຊັ່ນດຽວກັນ.

# ພາກທີ II:

# ຄວາມມຸ້ງຫວັງຂອງກາແດງລາວໃນອານາຄົດ: ສິ່ງທ້າທາຍ ແລະ ແນວທາງປະຕິບັດ ເພື່ອຈະບັນລຸເຖິງວິໄສທັດ ແລະ ພາລະກິດ ໃນອີກ 5 ປີ ຂ້າງໜ້າ

ອົງການກາແດງລາວ ມີເປົ້າໝາຍເປັນອົງການທີ່ນໍາໜ້າທາງດ້ານມະນຸດສະທໍາທີ່ເຂັ້ມແຂງ ໃນ ສປປ ລາວ. ຕໍ່ການປ່ຽນແປງ ແລະ ທ່າອ່ຽງ ຂອງໂລກ, ພາກພື້ນ ແລະ ພາຍໃນປະເທດ, ອົງການກາແດງລາວ ມີຂໍ້ຈໍາກັດດ້ວຍສິ່ງທ້າທາຍຫຼາຍປະການ. ສະນັ້ນ ຈໍາເປັນຕ້ອງມີການກະກຽມຄວາມພ້ອມຢ່າງເຕັມທີ່, ມີການຮ່ວມມືປະສານງານກັບລັດຖະບານ, ບັນດາກາແດງຄູ່ຮ່ວມງານ, ສະຫະພັນກາແດງ ແລະ ຊີກວົງເດືອນແດງສາກົນ, ຄະນະກໍາມະການກາແດງສາກົນ, ອົງການສະຫະປະຊາຊາດ, ອົງການຈັດຕັ້ງສາກົນ, ພາກເອກະຊົນ ແລະ ອົງການຈັດຕັ້ງສັງຄົມອື່ນໆ ເພື່ອຮັບມືກັບສິ່ງທ້າທາຍເຫລົ່ານັ້ນ. ນອກຈາກນີ້ຍັງຈະຕ້ອງທົບທວນຄືນ ກ່ຽວກັບພາລະກິດຂອງ ອົງການກາແດງລາວ ໃນໄລຍະໃໝ່.

## ສິ່ງທ້າທາຍໃນອານາຄົດ.

ສິ່ງທ້າທາຍ ທີ່ອົງການກາແດງລາວ ຈະຕ້ອງໄດ້ປະເຊີນໜ້າ ແລະ ຈໍາເປັນຕ້ອງໄດ້ຮັບມື ໃນຊຸມປີຂ້າງໜ້າມີດັ່ງນີ້:

1. **ປັບປຸງ ຖານະທາງດ້ານກົດໝາຍ ແລະໂຄງຮ່າງການຈັດຕັ້ງໃໝ່.**
   ດໍາລັດໃໝ່ ວ່າດ້ວຍການຈັດຕັ້ງ ຂອງອົງການກາແດງລາວ ທີ່ຈະຖືກຮັບຮອງເອົາໃນຕໍ່ໜ້າ ຈະເປັນສິ່ງທ້າທາຍອັນຫນຶ່ງ ເມື່ອຖືກນໍາມາບັງຄັບໃຊ້. ອົງການກາແດງລາວ ຈໍາເປັນຕ້ອງປັບປຸງໂຄງຮ່າງການຈັດຕັ້ງໃນທຸກລະດັບ. ຄະນະກໍາມະການກາແດງຂັ້ນສູນກາງ ຈະຕ້ອງໄດ້ຖືກສ້າງຕັ້ງຂຶ້ນ ເພື່ອຮັບປະກັນໃຫ້ກາແດງແຫ່ງຊາດມີການເຄື່ອນໄຫວໄດ້ດີ. ການພັດທະນາຂີດຄວາມສາມາດ ແລະ ການສະໜັບສະໜູນທາງດ້ານຊັບພະຍາກອນ ແມ່ນມີຄວາມຈໍາເປັນ. ນະໂຍບາຍ, ວິທີການ ແລະ ລະບົບຕ່າງໆ ຕ້ອງຢູ່ໃນສະພາບການທີ່ສາມາດຮັບມືກັບສິ່ງທ້າທາຍໃນໄລຍະຊຸມປີຂ້າງໜ້າ.

2. **ການພັດທະນາ ແລະ ສ້າງຄວາມເຂັ້ມແຂງ ທາງດ້ານ ຊັບພະຍາກອນມະນຸດ.**

ຊັບພະຍາກອນມະນຸດ ແມ່ນບັນຫາສຳຄັນ ແລະ ຮີບດ່ວນ ພາຍໃນອົງການກາແດງລາວ. ຈຳນວນພະນັກງານທີ່ມີ ຄວາມຊຳນິຊຳນານ ແລະ ປະສົບການ, ການຈັດວາງຕຳແໜ່ງງານທີ່ເໝາະສົມ ແລະ ການຮັກສາພະນັກງານໄວ້ ແມ່ນເປັນປັດໄຈທີ່ຕັດສິນ ໃນການໃຫ້ການບໍລິການທີ່ມີຄຸນນະພາບ ແລະ ມີປະສິດທິຜົນ. ສະນັ້ນ, ແນວທາງນະໂຍບາຍດ້ານຊັບພະຍາກອນມະນຸດສຳລັບພະນັກງານ, ສະມາຊິກ, ອາສາສະໝັກ, ຊາວໜຸ່ມກາແດງ ແລະ ການພັດທະນາຂີດຄວາມສາມາດຂອງເຂົາເຈົ້າ ແມ່ນມີຄວາມຈຳເປັນ ຕ້ອງໄດ້ຮັບການປັບປຸງ.

3. **ຮັບປະກັນຄວາມພຽງພໍ ແລະ ມີຄວາມຍືນຍົງ ທາງດ້ານທຶນຮອນ ແລະ ຊັບພະຍາກອນ.**

ຈະມີສິ່ງທ້າທາຍ ທີ່ອາດສາມາດເປັນໄປໄດ້ ໃນການລະດົມທຶນ ແລະ ຊອກຫາແຫລ່ງທຶນ ເພື່ອຮັບປະກັນໃຫ້ມີອຸປະກອນ ແລະ ການສະໜັບສະໜູນ ໃນການຕອບໂຕ້ ຢ່າງມີປະສິດທິຜົນ ຕໍ່ຄວາມຮຽກຮ້ອງຕ້ອງການອັນຮີບດ່ວນຂອງຜູ້ປະສົບເຄາະຮ້າຍ ແລະ ການປະຕິບັດວຽກງານຢ່າງຕໍ່ເນື່ອງຂອງ ອົງການກາແດງລາວ.

ຮັບປະກັນ ແລະ ພັດທະນາດ້ານຊັບພະຍາກອນຕ່າງໆ ເພື່ອຈະຊ່ວຍໃຫ້ອົງການກາແດງລາວກາຍເປັນອົງການທີ່ເຂັ້ມແຂງດ້ວຍຕົນເອງ, ແນໃສ່ຫຼຸດຜ່ອນການເພິ່ງພາອາໃສ ການຊ່ວຍເຫຼືອດ້ານການເງິນ ແລະ ດ້ານເຕັກນິກຈາກກາແດງເພື່ອນມິດເທື່ອລະກ້າວ.

ຍຸດທະສາດການຊອກຫາແຫລ່ງທຶນ ແລະ ການສ້າງແຫລ່ງລາຍຮັບ ແມ່ນມີຄວາມຈຳເປັນ ໃນນີ້ແມ່ນລວມ ທັງການສ້າງຂີດຄວາມສາມາດໃນການ ຂຽນບົດສະເໜີໂຄງການເພື່ອຂໍການສະໜັບສະໜູນ ແລະ ການເຂົ້າເຖິງແຫລ່ງທຶນຈາກຕ່າງປະເທດ. ນອກຈາກນີ້ລະບົບການບໍລິຫານ-ຈັດການ ແລະ ການລາຍງານດ້ານການເງິນ ກໍ່ມີຄວາມຈຳເປັນຕ້ອງໄດ້ຮັບການພັດທະນາເຊັ່ນດຽວກັນ.

4. **ນຳເອົາຫລັກການພື້ນຖານ ແລະ ຄຸນຄ່າທາງດ້ານມະນຸດສະທຳ ເຂົ້າສູ່ການປະຕິບັດຕົວຈິງ.**

ຄວາມເຂົ້າໃຈຂອງສັງຄົມຕໍ່ຫລັກການພື້ນຖານ ແລະ ຄຸນຄ່າທາງດ້ານມະນຸດສະທຳ ຍັງຈຳກັດ ແລະ ການເຄື່ອນໄຫວໂຄສະນາ ຂອງອົງການກາແດງລາວ ຕໍ່ວຽກງານດັ່ງກ່າວຍັງເຮັດບໍ່ທັນໄດ້ດີ, ສະນັ້ນ ເຮັດໃຫ້ຄວາມຮັບຮູ້ຂອງສັງຄົມຕໍ່ຄວາມເປັນໄປໄດ້ໃນການສະໜັບສະໜູນຈາກເຂົາເຈົ້າມີໜ້ອຍ. ການສ້າງຄວາມເຂົ້າອົກເຂົ້າໃຈ ໃນການເອື້ອເຟື້ອເພື່ອແຜ່ ແລະ ກະຕຸກຊຸກຍູ້ ໃຫ້ປະຊາຊົນປະກອບສ່ວນ ແລະ ສະໜັບສະໜູນໃນວຽກງານຕ່າງໆຂອງກາແດງລາວ ຍັງເປັນສິ່ງທີ່ທ້າທາຍໃນຕໍ່ໜ້າ. ອົງການກາແດງລາວມີຄວາມຈຳເປັນຕ້ອງ

ໄດ້ອອກແຮງ ໃນການໂຄສະນາປຸກລະດົມສັງຄົມໃຫ້ຫລາຍຂຶ້ນ ເພື່ອໃຫ້ມີການຊ່ວຍເຫລືອສະໜັບສະໜູນໃນວຽກງານຂອງຕົນ.

**5. ການພັດທະນາ ແລະ ສະໜັບສະໜູນກາແດງຂັ້ນແຂວງ-ຂັ້ນເມືອງ**

ການສ້າງຄວາມເຂັ້ມແຂງທາງດ້ານການນຳພາ ແລະ ບໍລິຫານຈັດການຂອງກາແດງຂັ້ນແຂວງ-ຂັ້ນເມືອງ ຈຳເປັນຕ້ອງໃຫ້ສອດຄ່ອງກັບການເຄື່ອນໄຫວຂອງກາແດງແຫ່ງຊາດ ແລະ ການເຄື່ອນໄຫວຂອງຂະບວນການກາແດງ. ຕ້ອງມີຄວາມພ້ອມທາງດ້ານເວລາ ແລະ ຊັບພະຍາກອນຕ່າງໆ ເພື່ອສະໜັບສະໜູນ ແລະ ພັດທະນາກາແດງລາວຂັ້ນແຂວງ-ຂັ້ນເມືອງ. ການພັດທະນາຂີດຄວາມສາມາດ ແລະ ການສ້າງຄວາມເຂັ້ມແຂງ ແມ່ນຄວາມຈຳເປັນ, ສະນັ້ນການນຳ, ພະນັກງານ, ເຄືອຄ່າຍອາສາສະໝັກ ແລະ ຊາວໜຸ່ມກາແດງ ຕ້ອງມີຄວາມສາມາດໃນການດຳເນີນງານໃຫ້ຫລາຍຂຶ້ນ, ເຮັດວຽກງານໃຫ້ດີຂຶ້ນ ແລະ ມີຄວາມກ້າວໜ້າຢ່າງຕໍ່ເນື່ອງ.

**6. ລະບົບເອກະສານ ແລະ ການລາຍງານ.**

ການພັດທະນາ ແລະ ສ້າງຄວາມເຂັ້ມແຂງໃນລະບົບການກວດກາຕິດຕາມ, ການປະເມີນຜົນ ແລະ ການລາຍງານທີ່ດີໃນອົງການກາແດງລາວ ກໍເປັນສິ່ງທ້າທາຍອີກອັນໜຶ່ງໃນການຈັດຕັ້ງປະຕິບັດຕົວຈິງ ເຊິ່ງມີຄວາມຈຳເປັນຕ້ອງສ້າງຂີດຄວາມສາມາດຢ່າງຕໍ່ເນື່ອງ ແລະ ມີການສະໜັບສະໜູນທາງດ້ານການເງິນ ເພື່ອຮັບປະກັນເຄື່ອງມື ແລະ ລະບົບຕ່າງໆ ເຫລົ່ານັ້ນໃຫ້ສາມາດຮັບໃຊ້ວຽກງານໄດ້ ພ້ອມກັນນັ້ນການນຳຂອງອົງການກາແດງລາວທຸກຂັ້ນ ຈະຕ້ອງເປັນເຈົ້າການສະໜັບສະໜູນເຮັດໃຫ້ສິ່ງເຫຼົ່ານັ້ນເກີດຂຶ້ນໄດ້.

**7. ການສ້າງຄວາມເຂັ້ມແຂງດ້ານການພົວພັນ, ການປະສານງານ ແລະ ການຮ່ວມມື.**

ການເພີ່ມທະວີການປະສານງານ ແລະ ຮ່ວມມືກັບລັດຖະບານ ສປປ ລາວ ແລະ ສະຖາບັນຕ່າງໆເຊັ່ນ: ສະຫະພັນກາແດງ ແລະ ຊີກວົງເດືອນແດງສາກົນ, ຄະນະກຳມະການກາແດງສາກົນ, ບັນດາກາແດງເພື່ອນມິດ, ອົງການສະຫະປະຊາຊາດ, ອົງການຈັດຕັ້ງສາກົນ ແລະ ເພື່ອນຮ່ວມງານອື່ນໆ ໃຫ້ຫລາຍຂຶ້ນ, ໃນການເຮັດວຽກຮ່ວມກັນ ເພື່ອແກ້ໄຂບັນຫາທີ່ກ່ຽວຂ້ອງກັບໄພພິບັດ, ສຸຂະພາບ ແລະ ຄຸນຄ່າດ້ານມະນຸດສະທຳນັ້ນກໍແມ່ນສິ່ງທ້າທາຍອັນໜຶ່ງ. ລະດັບການພົວພັນ, ປະສານງານ ແລະ ຕາໜ່າງການຮ່ວມມືທີ່ມີຢູ່ແລ້ວ ລະຫວ່າງອົງການກາແດງລາວ ແລະ ພາກສ່ວນຕ່າງໆຍັງບໍ່ທັນໄດ້ດີ. ບັນຫາດັ່ງກ່າວ ອາດຈະຂະຫຍາຍເປັນວົງກວ້າງ ຍ້ອນຄວາມຈຳກັດທາງຊັບພະຍາກອນ ແລະ ຄວາມຮູ້ຄວາມສາ

ມາດ. ທັງໝົດທີ່ກ່າວມາຂ້າງເທິງນີ້ ຈຳເປັນຈະຕ້ອງໄດ້ສ້າງໃຫ້ມີຄວາມເຂັ້ມແຂງ ແລະ ປັບປຸງໃຫ້ດີຂື້ນ.

8. **ການພົວພັນ ແລະ ການປະສານງານພາຍໃນທີ່ດີ.**
ການພົວພັນ ແລະ ການປະສານງານ ທັງສອງຝ່າຍລະຫວ່າງ ກາແດງລາວສູນກາງ ແລະ ກາແດງຂັ້ນທ້ອງຖິ່ນ ຍັງບໍ່ທັນໄດ້ດີເທົ່າທີ່ຄວນ. ການກຳນົດທຸກຂົງເຂດວຽກງານຫລັກຂອງ ອົງການກາແດງລາວ ໃຫ້ມາເຊື່ອມໂຍງເຂົ້າກັນ ຊຶ່ງຈະນຳພາອົງການກາແດງລາວ ໄປສູ່ຈຸດ ມຸ້ງໝາຍໃນພາລະໜ້າທີ່ ແລະ ຈຸດປະສົງທາງຍຸດທະສາດຂອງຕົນ, ທັງໝົດນີ້ແມ່ນຮຽກຮ້ອງ ໃຫ້ມີກົນໄກການພົວພັນ ແລະ ການປະສານງານທີ່ດີພາຍໃນອົງການກາແດງລາວ.

9. **ຄວາມເປັນເຈົ້າຕົນເອງ ແລະ ຄວາມຍືນຍົງ.**
ນີ້ກໍແມ່ນສິ່ງທ້າທາຍອັນນຶ່ງທີ່ມັກເກີດຂຶ້ນເລື້ອຍໆ ສຳລັບຄູ່ຮ່ວມງານທັງໝົດໃນການເປັນເຈົ້າ ຕົນເອງ ແລະ ການເຮັດໃຫ້ໂຄງການ-ແຜນງານຕ່າງໆມີຄວາມຍືນຍົງ. ອົງການກາແດງ ລາວ ແລະ ເພື່ອນຮ່ວມງານຂອງຕົນມີຄວາມຈຳເປັນຕ້ອງໄດ້ປຶກສາຫາລື ແລະ ຕົກລົງຮ່ວມ ກັນລະອຽດ ໃນການອອກແບບເບື້ອງຕົ້ນກ່ຽວກັບຄວາມຄາດຫວັງ, ການເປັນເຈົ້າຕົນເອງ ແລະ ຄວາມຍືນຍົງຂອງໂຄງການ, ເພື່ອໃຫ້ໝັ້ນໃຈວ່າ ໃນເວລາສິ້ນສຸດການຊ່ວຍເຫຼືອ ສາມາດເຊື່ອມສານເຂົ້າໃນໂຄງການ ແລະ ແຜນງານຕ່າງໆ ຂອງອົງການກາແດງລາວ.

ຄວາມສະລັບສັບຊ້ອນ ຂອງທຸກສິ່ງທ້າທາຍຂ້າງເທິງນີ້ ຮຽກຮ້ອງໃຫ້ອົງການກາແດງລາວ ປັບປຸ່ງ ຄວາມຮັບຮູ້ ແລະ ທັດສະນະຄະຕິ ເພື່ອເຮັດວຽກງານໃຫ້ດີຂື້ນໃນອານາຄົດ. ໃນການສ້າງຄວາມ ເຂັ້ມແຂງນັ້ນ ຕ້ອງສອດຄ່ອງຕາມຄຳຂວັນ ທີ່ວ່າ: **"ພະລັງແຫ່ງມະນຸດສະທຳ"** ເພື່ອດຳເນີນວຽກ ງານ **ໃຫ້ຫລາຍຂຶ້ນ, ໃຫ້ດີຂື້ນ ແລະ ເຂົ້າເຖິງຊຸມຊົນທີ່ສ່ຽງໄພສູງ ຢ່າງຕໍ່ເນື່ອງ.** ອົງການກາແດງ ລາວ ຈະຕ້ອງປັບປຸ່ງໃຫ້ເຂົ້າກັບບັນດາສິ່ງທ້າທາຍ ແລະ ກາລະໂອກາດຕ່າງໆ ໂດຍການທົບ ທວນຄືນໃໝ່ກ່ຽວກັບວິໄສທັດ ແລະ ພາລະກິດຂອງຕົນ ພ້ອມທັງກຳນົດ ບັນດາຂົງເຂດວຽກງານ ຫລັກ ທີ່ຈະຖືກນຳມາຈັດຕັ້ງປະຕິບັດໃນຊຸມປີຕໍ່ໜ້າ.

# ວິໄສທັດ ແລະ ພາລະກິດ:

## ວິໄສທັດ ອົງການກາແດງລາວ:

ນຳໜ້າໃນວຽກງານ ດ້ານມະນຸດສະທຳ ເພື່ອຮັບປະກັນ ໃຫ້ປະຊາຊົນຜູ້ສ່ຽງໄພສູງ ດຳລົງຊີວິດ ຢ່າງມີກຽດ ແລະ ສັກສີ

## ພາລະກິດຂອງອົງການກາແດງລາວ:

ໃນຖານະທີ່ເປັນອົງການຊ່ວຍໜູນລັດຖະບານ ເພື່ອປະຕິບັດວຽກງານດ້ານມະນຸດສະທຳ, ອົງການກາແດງລາວມີເປົ້າໝາຍ ຊ່ວຍເຫຼືອປະຊາຊົນຜູ້ສ່ຽງໄພສູງ ໃຫ້ທັນເວລາ ຕາມຄວາມຮຽກຮ້ອງຕ້ອງການຂັ້ນພື້ນຖານ.

ການດຳເນີນວຽກງານກັບປະຊາຊົນຜູ້ສ່ຽງໄພສູງ ແມ່ນແນໃສ່ປັບປຸງສຸຂະພາບ, ຊີວິດການເປັນຢູ່ ແລະ ຊ່ວຍເຂົາເຈົ້າ ໃນການຫ້າງຫາກະກຽມ ແລະ ຕອບໂຕ້ຕໍ່ໄພພິບັດ ບົນພື້ນຖານ ຫລັກການມະນຸດສະທຳ ຂອງກາແດງສາກົນ.

# ພາກທີ III:

# ທິດທາງຍຸດທະສາດ: ວຽກງານຂອງອົງການກາແດງລາວ ທີ່ຈະເຮັດໃນອານາຄົດ

ໜ້າທີ່ວຽກງານຂອງອົງການກາແດງລາວ ແມ່ນເດີນຕາມທິດທາງ ແລະ ອຸດົມຄະຕິດ້ານມະນຸດສະທຳ. ທັດສະນະຂອງອົງການກາແດງລາວ ແມ່ນຄວາມຈຳເປັນ ໃນການອຸທິດຕົນເພື່ອໃຫ້ກາຍເປັນອົງການທີ່ນຳໜ້າດ້ານມະນຸດສະທຳທີ່ມີປະສິດທິພາບ, ປະສິດທິຜົນຢ່າງແທ້ຈິງ, ກຽມພ້ອມທຸກເວລາ ເພື່ອຕອບສະໜອງຄວາມຕ້ອງການຂອງກຸ່ມຜູ້ສ່ຽງໄພສູງ ຢູ່ໃນທຸກຂົງເຂດເປົ້າໝາຍຂອງ ສປປ ລາວ. ໃນສະພາບການສ້າງຄວາມເຂັ້ມແຂງ ຂອງອົງການກາແດງລາວ ທີ່ມີຢູ່ແລ້ວ ແລະ ຄວາມຕ້ອງການຂອງສັງຄົມໃນລາວ ໂດຍສະເພາະຜູ້ສ່ຽງໄພສູງ, ອົງການກາແດງລາວ ໄດ້ລວບລວມເອົາ ບັນດາຜົນສຳເລັດຕ່າງໆ ຈາກການຈັດຕັ້ງປະຕິບັດແຜນຍຸດທະສາດປີ 2006-2010 ແລະ ເພື່ອເປັນບົດຮຽນມາຜັນຂະຫຍາຍເຂົ້າໃນ ແຜນຍຸດທະສາດປີ 2011-2015 ໂດຍສືບຕໍ່ແນໃສ່ເອົາ ***ສີ່ຂົງເຂດວຽກງານທີ່ເປັນບຸລິມະສິດຫລັກ ມາເປັນທິດທາງຍຸດທະສາດ.*** ບັນດາບຸລິມະສິດທິດທາງຍຸດທະສາດເຫລົ່ານີ້ ຈະໃຫ້ການສະໜັບສະໜູນກົງຈັກການຈັດຕັ້ງໃນໄລຍະຍາວ ເພື່ອເຮັດໃຫ້ອົງການກາແດງລາວ ເປັນອົງການນຳໜ້າດ້ານມະນຸດສະທຳ ທີ່ມີຄວາມສາມາດໃນການຊ່ວຍໜູນລັດຖະບານ ເພື່ອໃຫ້ການບໍລິການທີ່ຈຳເປັນ ແລະ ໃຫ້ຄວາມຊ່ວຍເຫຼືອດ້ານມະນຸດສະທຳໃນ ສປປ ລາວ.

| | |
|---|---|
| **ຂົງເຂດວຽກງານຫຼັກ ທີ 1:** | *ການຄຸ້ມຄອງໄພພິບັດ* |
| **ຂົງເຂດວຽກງານຫຼັກ ທີ 2:** | *ການສົ່ງເສີມສຸຂະພາບຊຸມຊົນ* |
| **ຂົງເຂດວຽກງານຫຼັກ ທີ 3:** | *ການສົ່ງເສີມຫລັກການ ແລະຄຸນຄ່າດ້ານມະນຸດສະທຳ* |
| **ຂົງເຂດວຽກງານຫຼັກ ທີ 4:** | *ການພັດທະນາອົງການ ແລະສ້າງຄວາມເຂັ້ມແຂງໃຫ້ແກ່ກາແດງແຫ່ງຊາດ* |

ຂົງເຂດວຽກງານຫລັກເຫຼົ່ານີ້ ແມ່ນສິ່ງທີ່ອົງການກາແດງລາວ ຕ້ອງໄດ້ປະຕິບັດເປັນປະຈຳ ຊຶ່ງມີຄວາມສຳຄັນເທົ່າທຽມກັນ ແລະ ເປັນບຸລິມະສິດ. "**ການພັດທະນາອົງການ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ກາແດງແຫ່ງຊາດ**" ແມ່ນອີງຕາມໂຄງສ້າງພື້ນຖານຂອງຂະບວນການກາແດງ ແລະ ຂອງອົງການກາແດງລາວ. ອົງການກາແດງລາວ ມີຄວາມມຸ້ງໝັ້ນ ໃນການໃຫ້ການໃກ້ຊິດຕິດແທດ ແລະ ຊ່ວຍເຫລືອແກ່ຊຸມຊົນຜູ້ສ່ຽງໄພສູງໃຫ້ທັນເວລາ ແລະ ມີປະສິດທິຜົນ. ແຜນວາດ ທີ່ອະທິບາຍກ່ຽວກັບ ຍຸດທະສາດອົງການກາແດງລາວໄດ້ຂັດຕິດໃນບົດຊ້ອນທ້າຍ **ກ. (Annex A.)**

ບັນດາສີ່ບຸລິມະສິດຍຸດທະສາດ ສຳຄັນແມ່ນແນໃສ່ສະໜອງຄວາມຕ້ອງການຂອງລາວໃນປະຈຸບັນ ແລະ ເປັນບາດກ້າວເດີນໃນອົງການມະນຸດສະທຳ ທີ່ນັບມື້ນັບເຂັ້ມແຂງຂື້ນໃນ ສປປ ລາວ ໃນການປະກອບສ່ວນຢ່າງຮີບດ່ວນ ເພື່ອໃຫ້ປະສົບຜົນສຳເລັດ ຕາມເປົ້າໝາຍສະຫະສະວັດ ດ້ານການພັດທະນາຂອງອົງການສະຫະປະຊາຊາດ ແລະ ແຜນພັດທະນາດ້ານເສດຖະກິດ-ສັງຄົມ ຄັ້ງທີ 7 (2011-2015) ຂອງລັດຖະບານແຫ່ງ ສປປ ລາວ, ຍຸດທະສາດ ແລະ ແຜນງານສຳລັບການເຊື່ອມສານແຜນນະໂຍບາຍ ຕໍ່ກັບການບໍລິການສາທາລະນະສຸກສຳລັບແມ່, ເດັກນ້ອຍເກີດໃໝ່ ແລະ ເດັກ (2009-2015) ແລະ ແຜນພັດທະນາຂະແໜງສາທາລະນະສຸກ 5 ປີ ຄັ້ງທີ 7 (2011-2015). ບັນດາບຸລິມະສິດເຫລົ່ານີ້ ຈະປະສົບຜົນສຳເລັດ ໂດຍການສືບຕໍ່ຜັນຂະຫຍາຍບັນດາຂົງເຂດວຽກງານຫລັກໃນປະຈຸບັນ ແລະ ອີງຕາມແຜນງານຫ້າປີຜ່ານມາ ທີ່ໄດ້ຈັດຕັ້ງປະຕິບັດໃນທົ່ວປະເທດ.

ບັນດາປັດໄຈ ທີ່ຈະກາຍເປັນແຮງຊຸກຍູ້ໃຫ້ແກ່ ວຽກງານຂອງອົງການກາແດງລາວເຊັ່ນ: ສະມາຊິກກາແດງ, ອາສາສະໝັກກາແດງ, ຊາວໜຸ່ມກາແດງ, ບົດບາດຍິງ-ຊາຍ, ການປຸກລະດົມຂົນຂວາຍ ແລະ ການສ້າງຂີດຄວາມສາມາດ.

## ເປົ້າໝາຍຍຸດທະສາດທີ 1:

**ໃຫ້ການຊ່ວຍເຫລືອປະຊາຊົນຜູ້ສ່ຽງໄພສູງໃນເວລາເກີດໄພພິບັດ ແລະ ສະໜັບສະໜູນເຂົາເຈົ້າໃນການສ້າງຊຸມຊົນປອດໄພ ແລະ ມີການຟື້ນຟູດີຂື້ນ.**

## ຂົງເຂດວຽກງານຫລັກທີ 1: ການຄຸ້ມຄອງໄພພິບັດ

ສປປ ລາວ ເປັນປະເທດທີ່ ເຄີຍໄດ້ຮັບຜົນກະທົບຢ່າງຮ້າຍແຮງ ຈາກຄວາມອັນຕະລາຍຂອງໄພທຳມະຊາດ ແລະ ມະນຸດສ້າງຂື້ນ ເຊີ່ງສົ່ງຜົນກະທົບ ໃຫ້ເກີດຄວາມເສັຍຫາຍ ຢ່າງຫລວງຫຼາຍແກ່ປະຊາຊົນຜູ້ສ່ຽງໄພສູງ ຕົວຢ່າງ: ຫວ່າງມໍ່ໆມານີ້ ມີພະຍຸຊ້າງສານ ໃນປີ 2008, ພະຍຸເກດສະໜາໃນປີ 2009 ທີ່ໄດ້ພັດຖະລົ່ມຂົງເຂດຕ່າງໆໃນລາວຢ່າງຮຸນແຮງ. ໄປພ້ອມໆກັບ ຜົນກະທົບຂອງໄພພິບັດນີ້, ທ່າອ່ຽງໃໝ່ ຂອງຄວາມອັນຕະລາຍ ຍັງຈະເຮັດໃຫ້ ສປປ ລາວ ຕ້ອງໄດ້ຮັບມືກັບສິ່ງທ້າທາຍຫຼາຍຢ່າງຕື່ມອີກ. ເພື່ອຈະບັນລຸເປົ້າໝາຍ ສະຫະສະວັດດ້ານການພັດທະນາຂອງສະຫະປະຊາຊາດ ທີ່ໄດ້ມີການຄາດຄະເນລ່ວງໜ້າໄວ້ນັ້ນ, ໃນຄວາມເປັນຈິງແລ້ວ ປະຈຸບັນນີ້ແມ່ນມີຄວາມເຊັດເຈນແລ້ວວ່າ ຊຸມຊົນທີ່ສ່ຽງໄພສູງ ໄດ້ມີການຂະຫຍາຍຕົວໄປຕາມສະພາບການປ່ຽນແປງຂອງພູມສັນຖານ ແລະ ອາໃສຢູ່ກັບ ສະພາບແວດລ້ອມທີ່ມີຄວາມສ່ຽງ ເຊີ່ງມັນເກີນຄວາມສາມາດຂອງເຂົາເຈົ້າ ທີ່ຈະຮັບມືໄດ້ ດ້ວຍແຫລ່ງຊັບພະຍາກອນຂອງເຂົາເຈົ້າເອງ.






ມີຫລາຍໜ້າທີ່ວຽກງານທີ່ອົງການກາແດງລາວ ຈະຕ້ອງເຮັດໃນການທ້າງທາກະກຽມ ແລະ ຕອບໂຕ້ຕໍ່ໄພພິບັດ. ເຖິງແມ່ນວ່າ ໃນຄວາມເປັນຈິງແລ້ວ ອົງການກາແດງລາວໄດ້ຖືກຮັບຮູ້ໃຫ້ເປັນອົງການນໍາໜ້າດ້ານມະນຸດສະທໍາ, ແຕ່ອົງການກາແດງລາວ ຍັງມີຄວາມຕ້ອງການສ້າງຕົນເອງໃຫ້ເປັນອົງການທີ່ເຂັ້ມແຂງຫຼາຍຂຶ້ນ ເພື່ອຮັບມືກັບສິ່ງທ້າທາຍໃໝ່ທີ່ຈະເກີດຂື້ນໃນ ຊູມປີຕໍ່ໜ້າ, ເຊັ່ນ: ການປັບຕົວໃຫ້ເຂົ້າກັບສະພາບການປ່ຽນແປງຂອງດິນຟ້າອາກາດ, ການເພີ້ມຂື້ນຂອງອຸບັດຕິເຫດຕາມທ້ອງຖະໜົນພາຍໃນປະເທດ ແລະ ການລະບາດຂອງພະຍາດຊະນິດໃໝ່. ຄວາມຈໍາເປັນອັນຮີບດ່ວນ ແມ່ນຕ້ອງໃຫ້ມີທີມງານທີ່ໄດ້ຮັບການອົບຮົມເປັນຢ່າງດີ, ມີຄວາມພ້ອມໃນການຮັບມືກັບພາວະສຸກເສີນໃນທົ່ວປະເທດ ແລະ ຕ້ອງສ້າງຄວາມເຂັ້ມແຂງ ຮ່ວມກັບຄູ່ຮ່ວມງານໃນທຸກລະດັບ ໃນການທ້າງທາກະກຽມ ແລະ ຫລຸດຜ່ອນຄວາມສ່ຽງຕໍ່ໄພພິບັດ, ເພື່ອສ້າງຊຸມຊົນໃຫ້ເຂັ້ມແຂງ ແລະ ມີການຟື້ນຟູຊີວິດການເປັນຢູ່ດີຂຶ້ນ.

## ພາຍໃຕ້ເປົ້າໝາຍຍຸດທະສາດທີ 1 ແລະ ຂົງເຂດວຽກງານຫລັກທີ 1, ອົງການກາແດງລາວໄດ້ຕັ້ງຈຸດປະສົງສະເພາະໄວ້ດັ່ງຕໍ່ໄປນີ້:

1. *ເພື່ອຫລຸດຜ່ອນຄວາມສ່ຽງ ທີ່ເກີດຈາກໄພພິບັດ ແລະບັນເທົາຜົນກະທົບໂດຍຜ່ານການປັບປຸງຂີດຄວາມສາມາດ ແລະກົນໄກໃນການທ້າງທາກະກຽມ ແລະຕອບໂຕ້ຕໍ່ໄພພິບັດຂອງອົງການກາແດງລາວ.*
2. *ເພື່ອຮັບມືກັບໄພພິບັດ ໂດຍຜ່ານການປັບປຸງ ການປູກຈິດສໍານຶກ ແລະສ້າງຂີດຄວາມສາມາດໃຫ້ແກ່ຊຸມຊົນໃນການທ້າງທາກະກຽມ ແລະການຕອບໂຕ້ຕໍ່ໄພພິບັດ.*

***ພາຍໃນປີ 2015,*** ການຈັດຕັ້ງ ແລະຂີດຄວາມສາມາດທາງດ້ານວິຊາການ ຂອງອົງການກາແດງລາວ ໃນການທ້າງທາກະກຽມ, ການປ້ອງກັນ ແລະ ບັນເທົາທຸກ ສໍາລັບການຕອບໂຕ້ ແລະ ຫລຸດຜ່ອນຄວາມສ່ຽງຕໍ່ໄພພິບັດ, ເພື່ອຜົນສໍາເລັດ ໃນການສະໜອງການບໍລິການຕ່າງໆ ຕາມຄວາມຕ້ອງການຂອງຊຸມຊົນ ຈະໄດ້ຮັບການປັບປຸງໃຫ້ເຂັ້ມແຂງຂຶ້ນ. ນອກຈາກນີ້ ການທ້າງທາກະກຽມ, ການປ້ອງກັນ ແລະ ການບັນເທົາທຸກ ຂອງຊຸມຊົນໃນການຮັບມືກັບໄພພິບັດ ແລະ ພາວະສຸກເສີນ ຈະໄດ້ຮັບການປັບປຸງໃຫ້ດີຂຶ້ນ. ທັງໝົດນີ້ ແມ່ນໝາກຜົນຂອງການປັບປຸງ ຄວາມຮັບຮູ້ ແລະ ຄວາມຊໍານິຊໍານານ ຂອງຊຸມຊົນເປົ້າໝາຍ, ອໍານາດການປົກຄອງທ້ອງຖິ່ນ ໃນການທ້າງທາກະກຽມ, ຕອບໂຕ້ ແລະ ຫລຸດຜ່ອນຄວາມສ່ຽງຕໍ່ໄພພິບັດ ໂດຍນໍາໃຊ້ວິທີການທີ່ມີສ່ວນຮ່ວມ ແລະພາຍໃຕ້ການເປັນເຈົ້າການຂອງຊຸມຊົນເອງ.

ອົງການກາແດງລາວ ມີພັນທະໃນການຊ່ວຍຊີວິດ, ປະກອບສ່ວນໃນການແບ່ງເບົາຄວາມທຸກທໍລະມານຂອງມວນມະນຸດ, ຈາກການຖືກທຳລາຍ ແລະ ຄວາມເສັຍຫາຍ ທັງປົກປ້ອງ, ທັງລະດົມໃຫ້ກຳລັງໃຈ ແລະ ໃຫ້ການຊ່ວຍເຫລືອຜູ້ປະສົບເຄາະຮ້າຍຈາກໄພພິບັດ. ນີ້ແມ່ນ ພັນທະພື້ນຖານຂອງກາແດງແຫ່ງຊາດ ທີ່ຈະຕ້ອງໄດ້ມີການກະກຽມເປັນຢ່າງດີ ແລະ ມີວິທີການ ທີ່ມີປະສິດທິພາບ ໃນການຊ່ວຍເຫລືອ ແລະ ຕອບສະໜອງ ຕາມຄວາມຮຽກຮ້ອງຕ້ອງການ ຕໍ່ຜູ້ສ່ຽງໄພສູງ ຈະແມ່ນຢູ່ທີ່ໃດ ຫລື ເວລາໃດກໍ່ຕາມ. ພາລະໜ້າທີ່ຂອງອົງການກາແດງລາວ ແມ່ນເຄື່ອນໄຫວຢູ່ພາຍໃຕ້ຫລັກການພື້ນຖານຂອງຂະບວນການກາແດງ ເຊິ່ງແນໃສ່ ການຄຸ້ມຄອງໄພພິບັດ ທີ່ມີປະສິດທິພາບ ແລະ ມີຄວາມຮັບຜິດຊອບ, ໂດຍການປະຕິບັດຮ່ວມກັນກັບ ແຜນດຳເນີນງານ ໃນການຄຸ້ມຄອງພາວະໂລກຮ້ອນ. ໃນໄລຍະຫ້າປີຂ້າງໜ້າ, ອົງການກາແດງລາວຈະສືບຕໍ່ ສຸມໃສ່ວຽກງານໂຄງການ ການຫລຸດຜ່ອນຄວາມສ່ຽງຈາກໄພພິບັດ ໃນພື້ນຖານຊຸມຊົນ ແລະ ອອກຫົວຄິດປະດິດສ້າງ ໃນການປະຕິບັດກິດຈະກຳອື່ນໆ ທີ່ກ່ຽວພັນກັບການຫ້າງຫາກະກຽມ, ຫລຸດຜ່ອນຄວາມສ່ຽງ, ຕອບໂຕ້ ແລະ ຟື້ນຟູຈາກໄພພິບັດ. ໂດຍການສະໜັບສະໜູນຈາກຄະນະກຳມະການກາແດງສາກົນ, ໂຄງການ ການທ້ອນໂຮມຄົນໃນຄອບຄົວທີ່ພັດພາກຈາກກັນ ແລະ ການຄຸ້ມຄອງຊິ້ນສ່ວນຊາກສົບ ກໍແມ່ນພາກສ່ວນນຶ່ງ ທີ່ຈະໄດ້ຈັດເຂົ້າໃນວຽກການຄຸ້ມຄອງໄພພິບັດ ຂອງອົງການກາແດງລາວ.

## <u>ເປົ້າໝາຍຍຸດທະສາດທີ 2:</u>

**ປະກອບສ່ວນໃນການເຂົ້າເຖິງການບໍລິການດ້ານສຸຂະພາບ, ສົ່ງເສີມການມີຊີວິດຢູ່ຢ່າງປອດໄພ ແລະຮັບມືກັບ ພາວະສຸກເສີນ ກ່ຽວກັບສຸຂະພາບ.**

## <u>ຂົງເຂດວຽກງານຫລັກທີ 2:</u> ການສົ່ງເສີມ ສຸຂະພາບຊຸມຊົນ

ສຸຂະພາບຂອງປະຊາຊົນໃນ ສປປ ລາວ ໂດຍທົ່ວໄປແລ້ວ ແມ່ນຍັງຢູ່ໃນສະພາບທີ່ຫຍູ້ງຍາກຫລາຍຢູ່, ບັນດາພະຍາດຕ່າງໆ ຍັງຖືໄດ້ວ່າ ເປັນບັນຫາສຳຄັນທີ່ມີສ່ວນເຮັດໃຫ້ ມີການເຈັບປ່ວຍ ແລະ ນຳໄປເຖິງການເສຍຊີວິດ. ຄວາມທຸກຍາກຂາດເຂີນ, ການຂາດສຸຂະອະນາໄມທີ່ຖືກຕ້ອງ, ການສະໜອງນ້ຳສະອາດບໍ່ພຽງພໍ ແລະ ການປະຕິບັດຕົວຈິງດ້ານສຸຂະອະນາໄມຍັງບໍ່ທັນໄດ້ດີ, ການຂາດສານອາຫານ, ການລະບາດຂອງພະຍາດຕິດຕໍ່ ແລະ ການໂຄສະນາປຸກລະດົມສົ່ງເສີມສຸຂະພາບຍັງຕ່ຳ, ການເຂົ້າເຖິງສະຖານທີ່ບໍລິການດ້ານສຸຂະພາບທີ່ໄດ້ມາດຖານ ແລະ ມີຄຸນະພາບ ຍັງບໍ່ທັນພຽງພໍຢູ່ໃນ ສປປ ລາວ. ນອກຈາກພະຍາດລະບາດອື່ນໆ ແລ້ວການບາດ

ເຈັບຈາກອຸບັດຕິເຫດຕາມທ້ອງຖະໜົນ ແມ່ນກວມເອົາອັດຕາສູງໃນ ສປປ ລາວ, ຊຶ່ງໄດ້ກາຍ ເປັນບັນຫາສິ່ງທ້າທາຍອັນໃຫຍ່ຫລວງ ທີ່ໄດ້ກະທົບຕໍ່ລະບົບສາທາລະນະສຸກ. ບັນຫາຢາສູບ ແລະ ເຄື່ອງດື່ມທີ່ມີສານມຶນເມົາ ກໍມີການພົວພັນເຖິງຄວາມເຈັບເປັນ, ການນໍາໃຊ້ຢາເສບຕິດທີ່ຜິດກົດໝາຍ ແລະ ການພົວພັນດ້ານອາຊະຍາກໍາ ກໍໄດ້ສິ່ງ



ຜົນສະທ້ອນເຖິງການປ່ຽນແປງ ແບບແຜນການດໍາລົງຊີວິດຂອງປະຊາຊົນລາວ. ໃນສິບປີຜ່ານມາ ສະພາບການຂອງໄຂ້ເລືອດອອກແມ່ນມີການຂະຫຍາຍຕົວຢ່າງໜັກໜ່ວງ ແລະ ປະຈຸບັນແມ່ນໄດ້ກາຍເປັນບັນຫາໃຫ່ຍດ້ານສຸຂະ ພາບພາຍໃນປະເທດ. ເຖິງແມ່ນວ່າ ສປປ ລາວ ເປັນປະເທດທີ່ມີອັດຕາສ່ວນການຕິດເຊື້ອ **ເຣສໄອວີ/ພະຍາດເອດ** ຕໍ່າກໍ່ຕາມ (0.2% ຂອງປະຊາຊົນໃນເກນອາຍຸ 15 ຫາ 40 ປີ, ຕາມການລາຍງານຂອງ UNDP ກ່ຽວກັບດັດສະນີດ້ານການພັດທະນາຊັບພະຍາກອນມະນຸດ), ວຽກງານປ້ອງກັນ**ເຊື້ອເຣສໄອວີ/ພະຍາດເອດ ຖືໄດ້ວ່າຍັງເປັນບັນຫາທີ່ໜ້າເປັນຫ່ວງ, ເນື່ອງຈາກວ່າ ສປປ ລາວ ມີຊາຍແດນຕິດກັບບັນດາປະເທດ ທີ່ມີອັດຕາການຕິດເຊື້ອເຣສໄອວີສູງ.** ສະພາບການດ້ານສຸຂະພາບຂອງແມ່ ແລະ ເດັກຢູ່ ສປປ ລາວ ຍັງເປັນບັນຫາຮີບດ່ວນທີ່ຈະຕ້ອງແກ້ໄຂ, ອັດຕາການຕາຍຂອງແມ່ຍັງສູງ (ໃນປີ 2010 ອັດຕາການຕາຍຂອງແມ່ ໃນເວລາເກີດລູກ ແມ່ນ 660 ຄົນ ຕໍ່ 100,000 ຄົນ, ຕາມການລາຍງານຂອງ UNDP ກ່ຽວກັບ ດັດສະນີດ້ານການພັດທະນາຊັບພະຍາ ກອນມະນຸດ) ແລະ ພ້ອມດຽວກັນນັ້ນ ອັດ ຕາການຕາຍຂອງເດັກເກີດໃໝ່ ກໍຍັງສູງເຊັ່ນດຽວກັນ (ຕາມຂໍ້ມູນຂອງທະນາຄານໂລກ ໃນປີ 2009 ແລະຂໍ້ມູນກ່ຽວກັບ ສະຖານະພາບຂອງເດັກໃນທົ່ວໂລກ ປີ 2010, ອັດຕາການຕາຍຂອງເດັກເກີດໃໝ່ແມ່ນ 46 ຄົນ ຕໍ່ 1,000 ຄົນ ແລະ ອັດຕາການຕາຍຂອງເດັກນ້ອຍຕໍ່າກວ່າ 5 ປີ ແມ່ນ 61 ຄົນ ຕໍ່ 1,000 ຄົນ).[1]

ລັດຖະບານ ສປປ ລາວ ໃຫ້ການສະໜັບສະໜູນ ກະຊວງສາທາລະນະສຸກ ໃນການກໍານົດບຸລິມະສິດເພື່ອປ້ອງກັນພະຍາດລະບາດ, ການຮັກສາສຸຂະພາບ, ການສົ່ງເສີມດ້ານໂພສະນາການ ແລະ ກ່ຽວກັບການວາງແຜນຍຸດທະສາດ ແລະ ແຜນງານສໍາລັບການເຊື່ອມສານ ແຜນນະໂຍບາຍຕໍ່ກັບການບໍລິການສາທາລະນະສຸກສໍາລັບແມ່, ເດັກນ້ອຍເກີດໃໝ່ ແລະ ເດັກ (2009-2015) ແລະ ແຜນພັດທະນາຂະແໜງສາທາລະນະສຸກ 5 ປີ ຄັ້ງທີ 7 (2011-2015), ໂດຍມີ

1 From the home page of WHO in Lao PDR: http://www.who.int/countryfocus/cooperation_strategy/ccsbrief_lao_en.pdf

ເປົ້າໝາຍເພື່ອແກ້ໄຂຄວາມຮຽກຮ້ອງຕ້ອງການອັນຈຳເປັນ ດ້ານສຸຂະພາບຂອງປະຊາຊົນ ແລະ ນຳໃຊ້ຊັບພະຍາກອນຂອງຊາດ ເພື່ອລົງທຶນໃນຂະແໜງການວັດທະນະທຳ-ສັງຄົມ.

## ພາຍໃຕ້ເປົ້າໝາຍຍຸດທະສາດທີ 2 ແລະ ຂົງເຂດວຽກງານຫລັກທີ 2, ອົງການກາແດງລາວ ໄດ້ກຳນົດຈຸດປະສົງສະເພາະໄວ້ດັ່ງຕໍ່ໄປນີ້:

1. *ເພື່ອຕອບສະໜອງເລືອດທີ່ປອດໄພ ແລະ ພຽງພໍໃຫ້ແກ່ຜູ້ເຈັບເປັນ ຕ້ອງການເລືອດໃນຂອບເຂດທົ່ວປະເທດ.*
2. *ເພື່ອປັບປຸງຄວາມຊຳນິຊຳນານ ດ້ານການປະຖົມພະຍາບານ ໃນບັນດາຊາວໜຸ່ມ ແລະ ຊຸມຊົນ ພ້ອມທັງການສ້າງຄວາມເຂັ້ມແຂງ ໃຫ້ແກ່ອົງການກາແດງລາວ ໃນການສ້າງແຫຼ່ງລາຍຮັບ ຈາກການປະຖົມພະຍາບານ.*
3. *ເພື່ອພັດທະນາການປົວແປງດ້ານຈິດໃຈ ໃນການຕອບສະໜອງກັບຄວາມຕ້ອງການ ໃນພາວະສຸກເສີນກ່ຽວກັບສຸຂະພາບ.*
4. *ເພື່ອໃຫ້ການຊ່ວຍເຫລືອ ໃນການເຂົ້າເຖິງຂໍ້ມູນຂ່າວສານດ້ານສຸຂະພາບ, ຈັດຫານ້ຳສະອາດ-ອະນາໄມສິ່ງແວດລ້ອມ ແລະ ການບໍລິການຮັກສາສຸຂະພາບແກ່ປະຊາຊົນຜູ້ສ່ຽງໄພສູງ.*
5. *ເພື່ອໃຫ້ການສະໜັບສະໜູນຜູ້ຕິດເຊື້ອເອດສໄອວີ ແລະ ຄອບຄົວຂອງເຂົາເຈົ້າ ໃຫ້ສາມາດເຂົ້າເຖິງຂໍ້ມູນຂ່າວສານ ແລະ ການບໍລິການດ້ານສຸຂະພາບ.*
6. *ເພື່ອເພີ່ມທະວີການເຂົ້າເຖິງການບໍລິການດ້ານສຸຂະພາບ ຂອງປະຊາຊົນຜູ້ສ່ຽງໄພສູງ ໂດຍຜ່ານກອງທຶນສຸຂະພາບສຳລັບຜູ້ທຸກຍາກ ແລະ ການເຂົ້າເຖິງການບໍລິການສຸຂະພາບຂອງແມ່ມານໃນເຂດຊົນນະບົດ.*
7. *ເພື່ອຄ້ຳປະກັນສະບຽງອາຫານ ແລະ ໂພສະນາການໃຫ້ແກ່ຄອບຄົວຜູ້ສ່ຽງໄພສູງ ໃນເຂດຊຸມຊົນຫ່າງໄກສອກຫຼີກ.*
8. *ເພື່ອຫລຸດຜ່ອນຈຳນວນຜູ້ບາດເຈັບຍ້ອນອຸບັດຕິເຫດຕາມທ້ອງຖະໜົນ ແລະ ກະກຽມໃນການຮັບມືກັບເຫດສຸກເສີນ, ໂດຍຜ່ານການໂຄສະນາ ກ່ຽວກັບຄວາມປອດໄພໃນການໃຊ້ລົດໃຊ້ຖະໜົນ.*
9. *ເພື່ອໃຫ້ການສະໜັບສະໜູນດ້ານການແພດໃນກໍລະນີສຸກເສີນ.*



***ພາຍໃນປີ 2015,*** ອົງການກາແດງລາວ ມີຄວາມມຸ້ງໝັ້ນ ເອົາໃຈໃສ່ໃນການໂຄສະນາສົ່ງເສີມ ແລະ ຮັກສາສຸຂະພາບຊຸມຊົນ ເຊິ່ງແມ່ນໜຶ່ງໃນຂົງເຂດວຽກງານຫຼັກ ເພື່ອຫລຸດຜ່ອນພະຍາດ ແລະ ອັດຕາການຕາຍຂອງແມ່ຍິງ ແລະ ເດັກນ້ອຍ. ອົງການກາແດງລາວຍັງໄດ້ ມີຄວາມມຸ້ງໝັ້ນ ໃນການປ້ອງກັນພະຍາດລະບາດ ແລະ ສ້າງໃຫ້ມີຄວາມຊໍານິຊໍານານ ເພື່ອຮັບມືກັບສິ່ງທ້າທາຍໃນພາວະສຸກເສີນດ້ານສຸຂະພາບ. ການປ້ອງກັນ ແລະ ການຕອບໂຕ້ຈະມີປະສິດທິພາບ ໂດຍຜ່ານເຄືອຂ່າຍອາສາສະໝັກ ແລະ ຊາວໜຸ່ມກາແດງລາວ. ການຮ່ວມມືລະຫວ່າງບັນດາຂົງເຂດວຽກງານຫລັກ ດ້ານການຄຸ້ມຄອງໄພພິບັດ ແລະ ການຮັກສາສຸຂະພາບ ແມ່ນມີຄວາມຈໍາເປັນ ຕ້ອງສ້າງໃຫ້ມີຄວາມເຂັ້ມແຂງຢ່າງຮີບດ່ວນ.

ດ້ວຍພາລະໜ້າທີ່ ທີ່ໄດ້ຮັບມອບໝາຍໃນການຈັດຕັ້ງປະຕິບັດ ນະໂຍບາຍເລືອດແຫ່ງຊາດ. ອົງການກາແດງລາວ ໄດ້ພັດທະນາແຜນຍຸດທະສາດເລືອດແຫ່ງຊາດ (2009-2013).[2] ໃນໄລຍະຊຸມປີຂ້າງໜ້ານີ້, ອົງການກາແດງລາວຈະຈັດລຽງບຸລິມະສິດ, ຈັດຕັ້ງປະຕິບັດແຜນຍຸດທະສາດເລືອດແຫ່ງຊາດ (2009-2013) ແລະ ສືບຕໍ່ປັບປຸງຖັດຈາກປີ 2013. ສືບຕໍ່ດໍາເນີນໂຄງການພັດທະນາສຸຂະພາບຊຸມຊົນຂັ້ນພື້ນຖານ, ການປ້ອງກັນພະຍາດລະບາດ, ການຈັດຫານໍ້າສະອາດ ແລະ ອະນາໄມສິ່ງແວດລ້ອມ, ພາວະສຸກເສີນດ້ານສຸຂະພາບ, ກອງທຶນສຸຂະພາບສໍາລັບຜູ້ທຸກຍາກ ແລະ ໂຄງການຄໍ້າປະກັນສະບຽງອາຫານ.

---

[2] Lao RC's Blood Transfusion Service Strategy 2009-2013.

ເນື່ອງຈາກວ່າ ອຸບັດຕິເຫດຕາມທ້ອງຖະໜົນນັບມື້ ນັບເພີ່ມຂຶ້ນ, ອົງການກາແດງລາວ ຈະໄດ້ເອົາໃຈໃສ່ໃນການໂຄສະນາປູກຈິດສຳນຶກ ກ່ຽວກັບ ຄວາມປອດໄພຕາມທ້ອງຖະໜົນໃຫ້ຫລາຍຂຶ້ນ ແລະ ປ້ອງກັນເພື່ອຫລຸດຜ່ອນຜົນກະທົບ ແລະ ອຸບັດຕິເຫດຕາມທ້ອງຖະໜົນ. ອົງການກາແດງລາວ ຈະສ້າງຄວາມເຂັ້ມແຂງໃຫ້ທີມງານ ດ້ານວຽກງານປະຖົມພະຍາບານຂອງຕົນເພື່ອໃຫ້ການບໍລິການປະຖົມພະຍາບານຊຸມຊົນ ຜູ້ປະສົບເຄາະຮ້າຍຈາກພາວະສຸກເສີນ ແລະ ໄພພິບັດ ໂດຍຜ່ານພະນັກງານ ແລະ ເຄືອຂ່າຍອາສາສະໝັກອົງການກາແດງລາວ ພ້ອມກັນນັ້ນ ກໍຈະຂະຫຍາຍການອົບຮົມໃຫ້ແກ່ບັນດາບໍລິສັດ ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ (NGOs), ເພື່ອເປັນການ ປະສອບສ່ວນໃນການສ້າງແຫຼ່ງລາຍຮັບໃຫ້ແກ່ອົງການກາແດງລາວ. **ໃນກໍລະນີສຸກເສີນ, ອົງການກາແດງລາວ ຈະໃຫ້ການສະໜັບສະໜູນດ້ານການແພດ. ສະຫຼຸບຄວາມແລ້ວ ອົງການກາແດງລາວ ຈະເປັນໜຶ່ງໃນບັນດາອົງການຈັດຕັ້ງອື່ນໆ ທີ່ຈັດຕັ້ງປະຕິບັດການຕອບໂຕ້ລະດັບຊາດ ເພື່ອແນໃສ່ຫຼຸດຜ່ອນຜົນກະທົບຂອງເຊື້ອເຮສໄອວີ/ພະຍາດເອດ ຕໍ່ການພັດທະນາເສດຖະກິດ-ສັງຄົມ ໂດຍເລັ່ງໃສ່ ໃຫ້ການຊ່ວຍເຫຼືອຜູ້ຕິດເຊື້ອເຮສໄອວີ.**

## <u>ເປົ້າໝາຍຍຸດທະສາດທີ 3:</u>

## ສົ່ງເສີມຫລັກການພື້ນຖານ, ກົດໝາຍມະນຸດສະທຳສາກົນ ແລະ ຄຸນຄ່າດ້ານມະນຸດສະທຳ ລວມທັງປຸກລະດົມການປະກອບສ່ວນຂອງສັງຄົມ.

## <u>ຂົງເຂດວຽກງານຫລັກທີ 3:</u> ໂຄສະນາສົ່ງເສີມຫລັກການພື້ນຖານຂອງຂະບວນ ການກາແດງ ແລະ ຄຸນຄ່າດ້ານມະນຸດສະທຳ

ອົງການກາແດງລາວ ຮັບຮູ້ວ່າຄວາມສ່ຽງໄພທົ່ວໄປ ສ່ວນໃຫຍ່ບໍ່ໄດ້ເກີດຂຶ້ນ ຍ້ອນໄພພິບັດ ແລະ ພະຍາດພຽງຢ່າງດຽວເທົ່ານັ້ນ ແຕ່ຫາກຍັງເກີດຂຶ້ນຍ້ອນຫລາຍປັດໃຈ ທີ່ສະຫຼັບສັບຊ້ອນ ຂອງສັງຄົມ ເຊິ່ງຕົ້ນກຳເນີດແມ່ນຄວາມບໍ່ເທົ່າທຽມກັນ, ຄວາມຫຼຸດໂຕນກັນ ແລະ ຄວາມບໍ່ຍຸດຕິທຳ, ຫຼືຄວາມສິ້ນຫວັງ ເຊິ່ງເກີດມາຈາກຄວາມໂດດດ່ຽວປ່ຽວພອຍ, ການຖືກປ່ອຍປະລະເລີຍ ແລະ ຄວາມທຸກຍາກຂາດເຂີນ. ກຸ່ມຄົນດ້ອຍໂອກາດ ລວມມີແມ່ຍິງ, ຍິງສາວ, ຜູ້ເຖົ້າ, ຜູ້ຕິດເຊື້ອເຮສໄອວີ ຫຼື ຜູ້ເປັນພະຍາດ ແລະ ຄົນພິການ, ແລະ <u>*ປະຊາຊົນບັນດາເຜົ່າ ເຊິ່ງເປັນຜູ້ທີ່ອາດໄດ້ຮັບອັນຕະລາຍ ແລະ ໄພຂົ່ມຂູ່ ທາງດ້ານວັດທະນະທຳ ແລະ ສັງຄົມ*</u>. ອີກດ້ານໜຶ່ງແມ່ນ

ຄວາມບໍ່ເຂົ້າໃຈຕໍ່ຄຸນຄ່າ ຂອງວຽກງານມະນຸດສະທຳ ແລະ ຄວາມສຳຄັນຂອງວຽກງານກາແດງ ຊຶ່ງຈະເຮັດໃຫ້ສັງຄົມມີຄວາມຈຳກັດ ໃນການປະກອບສ່ວນ ແລະ ໃຫ້ການສະໜັບສະໜູນວຽກງານມະນຸດສະທຳໃນ ສປປ ລາວ. ອີກຢ່າງໜຶ່ງ, ລະເບີດທີ່ຍັງບໍ່ທັນແຕກ ແລະ ສິ້ນສ່ວນວັດຖຸລະເບີດຂອງສົງຄາມທີ່ຕົກຄ້າງ ຍັງສົ່ງຜົນກະທົບຢ່າງໃຫຍ່ຫຼວງ ຢູ່ ສປປ ລາວ (ERW).

ອົງການກາແດງລາວ ມີພັນທະຂອງຕົນຕໍ່ກັບພາລະໜ້າທີ່ ທີ່ໄດ້ຖືກມອບໝາຍ ໃນການໂຄສະນາເຜີຍແຜ່ຫລັກການພື້ນຖານ ແລະ ຄຸນຄ່າດ້ານມະນຸດສະທຳ, ສະນັ້ນ ສິດທິພື້ນຖານພົນລະເມືອງຂອງກຸ່ມຄົນຜູ້ດ້ອຍໂອກາດ ຈະໄດ້ຮັບການເອົາໃຈໃສ່ ແລະ ຮັບປະກັນ. ໃນການເຮັດໜ້າທີ່ດັ່ງກ່າວນີ້ ອົງການກາແດງລາວ ຈຳຕ້ອງອອກແຮງປຸກລະດົມຂົນຂວາຍມວນຊົນ ໃນການສ້າງໂອກາດ ໃຫ້ເຂົາເຈົ້າມີຄວາມຮັບຮູ້, ເຂົ້າໃຈ ແລະ ມີສ່ວນຮ່ວມໃນການປະຕິບັດວຽກງານມະນຸດສະທຳຫລາຍຂື້ນ, ເພື່ອເຮັດໃຫ້ການບໍລິການດີຂື້ນ ພ້ອມທັງລະດົມພະລັງແຫ່ງມະນຸດສະທຳໃນການສືບຕໍ່ຮັບມືກັບຄວາມສ່ຽງຂອງຊຸມຊົນ. ການເຂົ້າຮ່ວມ ແລະ ເປັນເຈົ້າການຢ່າງຫ້າວຫັນ ໃນການດຳເນີນກິດຈະກຳ ຂອງອາສາສະໝັກ, ເປັນຕົ້ນແມ່ນອາສາສະໝັກກາແດງ ແລະ ຊາວໜຸ່ມກາແດງ ແມ່ນຂໍກຸນແຈທີ່ສຳຄັນ ໃນການເຄື່ອນໄຫວວຽກງານໃຫ້ດີ ແລະ ໃຫ້ຫຼາຍຂື້ນ ໂດຍສະເພາະແມ່ນ ການເຂົ້າເຖິງກຸ່ມຄົນຜູ້ສ່ຽງໄພສູງ.

## ພາຍໃຕ້ເປົ້າໝາຍຍຸດທະສາດທີ 3 ແລະ ບັນດາຂົງເຂດວຽກງານຫລັກທີ 3, ອົງການກາແດງລາວໄດ້ກຳນົດຈຸດປະສົງສະເພາະໄວ້ດັ່ງຕໍ່ໄປນີ້:

1. *ເພື່ອຍົກສູງຄວາມຮັບຮູ້ ແລະ ຄວາມເຂົ້າໃຈຂອງສັງຄົມ ຕໍ່ຫລັກການພື້ນຖານຂອງຂະບວນການກາແດງ ແລະ ຊີກວົງເດືອນແດງສາກົນ ແລະ ກົດໝາຍມະນຸດສະທຳສາກົນ.*
2. *ເພື່ອຍົກສູງພາບພົດຂອງອົງການກາແດງລາວ ໃນຖານະທີ່ເປັນອົງການນຳໜ້າທາງດ້ານມະນຸດສະທຳ.*
3. *ເພື່ອໃຫ້ໄດ້ຮັບການສະໜັບສະໜູນ ແລະ ການມີສ່ວນຮ່ວມຂອງສັງຄົມ ທາງດ້ານວັດຖຸ ແລະ ຈິດໃຈ ຈຶ່ງຈະເຮັດໃຫ້ອົງການກາແດງລາວ ສາມາດໃຫ້ການບໍລິການແກ່ຊຸມຊົນຜູ້ສ່ຽງໄພສູງ.*
4. *ເພື່ອປັບປຸງເຄືອຄ່າຍອາສາສະໝັກຊາວໜຸ່ມກາແດງໃຫ້ເຂັ້ມແຂງ ແລະ ຮັບປະກັນການມີສ່ວນຮ່ວມຂອງເຂົາເຈົ້າ ໃນການຈັດຕັ້ງປະຕິບັດວຽກງານມະນຸດສະທຳ ຂອງອົງການກາແດງລາວ ໃຫ້ເປັນຮູບປະທຳ.*

***ພາຍໃນປີ 2015,*** ພາບພົດອັນພົ້ນເດັ່ນຂອງອົງການກາແດງລາວ ສະແດງອອກ ໃນການບໍລິການທີ່ມີປະສິດທິພາບນັ້ນ ຈະເຮັດໃຫ້ອົງການກາແດງລາວ ກາຍເປັນອົງການທີ່ມີ ຄວາມໝັ້ນທ່ຽງດ້ານທຶນຮອນຫຼາຍຂຶ້ນ, ພ້ອມທັງໄດ້ຮັບຄວາມເຊື່ອໝັ້ນ ແລະ ຄວາມໄວ້ວາງໃຈຈາກສັງຄົມ. ການໂຄສະນາເຜີຍແຜ່ຢ່າງກວ້າງຂວາງ ກ່ຽວກັບເນື້ອໃນສຳຄັນຂອງຂະບວນການກາແດງ ແລະ ຊີກວົງເດືອນແດງ ແລະ ຄວາມເຂົ້າໃຈຕໍ່ກັບບັນຫາສິ່ງທ້າທາຍຂອງໂລກ ຈະເປັນສິ່ງດຶງດູດໃຫ້ມີຄວາມສົນໃຈຈາກມວນຊົນ ພ້ອມທັງຈະໄດ້ຮັບການສະໜັບສະໜູນເພີ່ມຂຶ້ນ. ຫລັກການພື້ນຖານຂອງຂະບວນການກາແດງ, ກົດໝາຍມະນຸດສະທຳສາກົນ ແລະ ຄຸນຄ່າດ້ານມະນຸດສະທຳແມ່ນຈະຕ້ອງ ໄດ້ຖືກສົ່ງເສີມ ແລະ ເຜີຍແຜ່ຢ່າງປົກກະຕິໃຫ້ແກ່ພະນັກງານ, ກຸ່ມເປົ້າໝາຍຫລັກ, ອາສາສະໝັກກາແດງ, ຊາວໜຸ່ມກາແດງ, ນັກກົດໝາຍ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ. ຄວາມຫ້າວຫັນ ແລະ ເຂັ້ມແຂງຂອງຕາໜ່າງຊາວໜຸ່ມ ແລະ ອາສາສະໝັກກາແດງ ຈະໄດ້ຮັບການປັບປຸງຢ່າງຕັ້ງໜ້າ ແລະ ຂະຫຍາຍຕົວໃນການບໍລິການຊ່ວຍເຫລືອ ວຽກງານມະນຸດສະທຳຢ່າງມີປະສິດທິພາບ ແລະ ທັນເວລາ. ອີກຢ່າງໜຶ່ງ, ຈຳນວນຜູ້ບາດເຈັບຍ້ອນລະເບີດຕົກຄ້າງບໍ່ທັນແຕກໃນປາງສົງຄາມຢູ່ເຂດເປົ້າໝາຍ ກໍຈະໄດ້ຫລຸດຜ່ອນລົງ, ຊີວິດການເປັນຢູ່ຂອງປະຊາຊົນຜູ້ທຸກຍາກຂາດເຂີນ ກໍໄດ້ຮັບການສົ່ງເສີມ.

ອີກຫ້າປີໃນຕໍ່ໜ້າ, ອົງການກາແດງລາວ ຈະສ້າງ ຄວາມເຂັ້ມແຂງ ທາງດ້ານກົນໄກການ ດຳເນີນງານ ແບບຫຼາຍຮູບຫຼາຍສີ ໃນການໂຄສະນາ ເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບຫລັກການພື້ນຖານ ແລະ ສົ່ງເສີມຄຸນຄ່າດ້ານມະນຸດສະທຳ, ກົດໝາຍມະນຸດສະທຳສາກົນ, ແລະ ສັນຍາລັກ ຕ່າງໆ ຂອງກາແດງ ແລະ ຊີກວົງເດືອນແດງ ໃຫ້ແກ່ສັງຄົມ ລວມທັງອົງການຈັດຕັ້ງພາກລັດໃນທຸກລະດັບ. ການວາງແຜນໃນການໂຄສະນາທີ່ດີແມ່ນມີຄວາມຈຳເປັນ, ຊຶ່ງໃຫ້ກວມລວມ ເອົາທຸກຊັ້ນຄົນໃນສັງຄົມລວມທັງການໂຄສະນາ ໃຫ້ແກ່ປະຊາຊົນຜູ້ດ້ອຍໂອກາດ ແລະ ຄົນພິການ ຜູ້ໄດ້ຮັບຜົນກະທົບຈາກລູກລະເບີດຕົກຄ້າງບໍ່ທັນແຕກ





ໃນປາງສົງຄາມ ພ້ອມທັງການຊ່ວຍເຫລືອຜູ້ປະສົບເຄາະຮ້າຍຕ່າງໆ. ອົງການກາແດງລາວ ຈະສະໜັບສະໜູນຊາວໜຸ່ມ ແລະ ອາສາສະໝັກ ໃຫ້ເປັນເຈົ້າການໃນການຈັດຕັ້ງປະຕິບັດ ແລະສົ່ງເສີມຫຼັກການມະນຸດ ສະທຳ, ດ້ວຍວິທີການຊ່ວຍເຫລືອເພື່ອນມະນຸດດ້ວຍກັນ ຢ່າງມີປະສິດທິພາບ ແລະ ທັນເວລາ. ການສະໜັບສະໜູນປັບປຸງຕາໜ່າງ ອາສາສະໝັກຊາວໜຸ່ມກາແດງ ແລະ ການປະກອບສ່ວນຂອງເຂົາເຈົ້າ ໃນການບໍລິການວຽກງານມະນຸດສະທຳ ຈະຕ້ອງໄດ້ສືບຕໍ່ລະດົມຊັບພະຍາກອນ ແລະ ສ້າງໃຫ້ມີຄວາມເຂັ້ມແຂງແກ່ເຂົາເຈົ້າໃນຕໍ່ໜ້າ.

ນີ້ແມ່ນ ຄວາມມຸ້ງຫວັງ ເພື່ອສ້າງຄວາມເຂັ້ມແຂງ ແລະ ໃຫ້ການສະໜັບສະໜູນແກ່ອາສາສະໝັກ ແລະ ຊາວໜຸ່ມກາແດງທີ່ມີຢູ່ ພ້ອມທັງການຮັບສະໝັກມາໃໝ່ ໃຫ້ເພີ້ມຂຶ້ນ ເພື່ອປະກອບສ່ວນເຂົ້າໃນວຽກງານຂອງກາແດງລາວໃນທຸກລະດັບ. ອົງການກາແດງຈະຮັບປະກັນທັງສີ່ວຽກງານຫລັກຂອງຕົນ ໃຫ້ເຊື່ອມສານກັບ ວຽກງານອາສາສະໝັກ ແລະ ຊາວໜຸ່ມກາແດງ ແລະໃຫ້ຄວາມສຳຄັນແກ່ເຂົາເຈົ້າໃນການເຂົ້າຮ່ວມ ແລະ ປະຕິບັດວຽກງານ ຢ່າງຖືກຕ້ອງ ແລະເໝາະສົມ. ສິ່ງສຳຄັນຄຽງຄູ່ກັນນັ້ນ, ອົງການກາແດງລາວຈະຕ້ອງຮັບປະກັນວ່າ ຂົງເຂດວຽກງານຫລັກທັງໝົດ ຈະໄດ້ຮັບການຈັດຕັ້ງປະຕິບັດ ບົນພື້ນຖານຂອງຫລັກການ ແລະຄຸນຄ່າຂອງຂະບວນການກາແດງ.

## <u>ເປົ້າໝາຍຍຸດທະສາດທີ 4:</u>

**ສ້າງຄວາມເຂັ້ມແຂງ ໃຫ້ແກ່ອົງການກາແດງລາວ ໃນຖານະທີ່ເປັນອົງການນຳໜ້າ ທາງດ້ານມະນຸດສະທຳ ແລະ ເປັນອົງການກາແດງແຫ່ງຊາດ ທີ່ເຄື່ອນໄຫວໄດ້ດີ.**

## <u>ຂົງເຂດວຽກງານຫລັກທີ 4:</u> ການພັດທະນາອົງການ ແລະສ້າງຄວາມເຂັ້ມແຂງໃຫ້ແກ່ກາແດງແຫ່ງຊາດ

ໃນຕົວຈິງແລ້ວ ທັງສີ່ໜ້າວຽກບຸລະມະສິດຕົ້ນຕໍນັ້ນ, ອົງການກາແດງລາວ ໄດ້ຊອກວິທີທາງ ໃນການພັດທະນາຕົນເອງໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ໂດຍນຳໃຊ້ສອງວິທີການຫຼັກ ໃນການຈັດຕັ້ງປະຕິບັດ:

# <u>ວິທີການປະຕິບັດທີ 1:</u> ສ້າງກາແດງແຫ່ງຊາດໃຫ້ເຄື່ອນໄຫວໄດ້ດີ



ວິທີການນີ້ ຈະເປັນແນວທາງທີ່ຈະສ້າງໃຫ້ ອົງການກາແດງລາວ ກາຍເປັນອົງການ ທີ່ມີ ພື້ນຖານແຂງແກ່ນ ໃນທຸກຂົງເຂດວຽກງານ. ການສ້າງກາແດງແຫ່ງຊາດໃຫ້ມີຄວາມເຂັ້ມແຂງ ແລະເຄື່ອນໄຫວໄດ້ດີ ຕ້ອງອາໄສເວລາ, ຊັບພະຍາກອນ, ຄວາມຕັດສິນໃຈສູງຢ່າງແຮງກ້າ ຂອງການນຳ, ພະນັກງານ ແລະ ອາສາສະໝັກກາແດງ, ພ້ອມທັງການສະໜັບສະໜູນຕ່າງໆ ໃນການພັດທະນາຂີດຄວາມສາມາດໃຫ້ແກ່ພະນັກງານ. ໂຄງຮ່າງການ ຈັດຕັ້ງ ແລະ ກົນໄກທີ່ມີຢູ່ ກໍມີຄວາມຈຳເປັນຕ້ອງໄດ້ຮັບການປັບປຸງ, ດ້ວຍລະບົບ ແລະ ລະບຽບແບບແຜນວິທີເຮັດວຽກທີ່ຈະແຈ້ງ. ອົງການກາແດງລາວ ມີຄວາມມຸ້ງໝັ້ນໃນການສ້າງຕົນເອງໃຫ້ເຕີບໃຫຍ່ຂະຫຍາຍຕົວແບບຍືນຍົງ ເນື່ອງຈາກວ່າອົງການກາແດງລາວ ມີຄວາມມຸ້ງຫວັງຢາກຈະເຮັດພາລະໜ້າທີ່ຂອງຕົນໃຫ້ຫຼາຍທີ່ສຸດ ໃນການບໍລິການ ແກ່ປະຊາຊົນຜູ້ສ່ຽງໄພສູງ.

**ພາຍໃຕ້ວິທີການປະຕິບັດທີ 1 ຂອງຂົງເຂດວຽກງານຫລັກທີ 4, ອົງການກາແດງລາວ ໄດ້ກຳນົດຈຸດປະສົງສະເພາະໄວ້ດັ່ງຕໍ່ໄປນີ້:**

1. *ເພື່ອປັບປຸງຖານະບົດບາດ ຂອງອົງການກາແດງລາວ ໂດຍມີການຮອງຮັບດ້ານນິຕິກຳ ໃນການທີ່ເປັນອົງການນຳໜ້າທາງດ້ານມະນຸດສະທຳ ໃນ ສປປ ລາວ.*
2. *ເພື່ອລິເລີ່ມຂະບວນການ ການຮັບຮອງເອົາກາໝາຍ ແລະ ກົດໝາຍກາແດງ.*
3. *ເພື່ອພັດທະນາການຄຸ້ມຄອງ ແລະ ການບໍລິຫານ ໃນການຮັບປະກັນໃຫ້ ອົງການກາແດງລາວ ສາມາດເຄື່ອນໄຫວໄດ້ດີຂື້ນ.*
4. *ເພື່ອສ້າງຂີດຄວາມສາມາດດ້ານຊັບພະຍາກອນມະນຸດ (ພະນັກງານ, ສະມາຊິກ, ອາສາສະໝັກ ແລະຊາວໜຸ່ມກາແດງ) ໃນການປະຕິບັດວຽກງານມະນຸດສະທຳຢ່າງມີປະສິດທິພາບ.*

5. *ເພື່ອສູ້ຊົນບຸກບືນ ແລະ ຕັດສິນໃຈ ເຮັດວຽກງານການຊອກຫາແຫລ່ງລາຍຮັບ, ການລະດົມແຫລ່ງທຶນ ແລະ ຊັບພະຍາກອນຕ່າງໆ ໃຫ້ແກ່ກາແດງລາວ, ໂດຍການຮ່ວມມືກັບເພື່ອນຮ່ວມງານຕ່າງໆ ທັງພາຍໃນ ແລະ ສາກົນ ເພື່ອຮັບປະກັນການພັດທະນາແບບຍືນຍົງ.*
6. *ເພື່ອປັບປຸງລະບົບການຄຸ້ມຄອງ, ການບໍລິຫານ-ຈັດການໂດຍລວມ ແລະ ການອຳນວຍຄວາມສະດວກຕ່າງໆ ຢ່າງມີປະສິດທິພາບ ແລະ ການດຳເນີນ ທຸກວຽກງານ ຢ່າງມີຄວາມຮັບຜິດຊອບສູງ.*

***ພາຍໃນປີ 2015,*** ອົງການກາແດງ ຈະເດີນຕາມເສັ້ນທາງ ໃນການເປັນກາແດງແຫ່ງຊາດທີ່ສາມາດເຄື່ອນໄຫວໄດ້ດີ. ກາແດງແຫ່ງຊາດ ມີໜ້າທີ່ພັດທະນາກາແດງຂັ້ນທ້ອງຖິ່ນຂອງຕົນໃຫ້ເຄື່ອນໄຫວໄດ້ດີ ແລະ ມີຄວາມເປັນເອກະລາດ, ໜັກແໜ້ນທາງດ້ານການນຳພາ ແລະ ການບໍລິຫານຈັດການ ພ້ອມດ້ວຍການສ້າງພື້ນຖານໂຄງລ່າງທີ່ດີ ແລະ ເຂັ້ມແຂງ (ຈາກກາແດງຂັ້ນແຂວງລົງສູ່ກາແດງຂັ້ນເມືອງ ແລະ ລົງຮອດອາສາສະໝັກຊຸມຊົນ). ການຄຸ້ມຄອງບໍລິຫານທີ່ດີ, ນອກຈາກສ້າງຄວາມເຂັ້ມແຂງໃຫ້ແກ່ອົງການກາແດງລາວແລ້ວ ຍັງຈະຮັບປະກັນເຮັດໃຫ້ບັນລຸເປົ້າໝາຍຍຸດທະສາດ, ຈຸດປະສົງ ແລະ ບັນດາຄາດຄະເນຜົນໄດ້ຮັບ ໄດ້ຖືກຈັດຕັ້ງປະຕິບັດໃຫ້ປະສົບຜົນສຳເລັດຕາມທີ່ໄດ້ວາງໄວ້. ຊັບພະຍາກອນມະນຸດ ຂອງອົງການກາແດງລາວ (ລວມທັງອາສາສະໝັກ ແລະ ຊາວໜຸ່ມກາແດງ) ຈະໄດ້ຮັບການປັບປຸງ ບົນພື້ນຖານການພັດທະນາແຜນຍຸດທະສາດ ຄຸ້ມຄອງບຸກຄະລາກອນ. ລະບົບການຄຸ້ມຄອງ ແລະ ນະໂຍບາຍຕ່າງໆ ຈະໄດ້ຮັບການພັດທະນາ. ອາສາສະໝັກ, ຊາວໜຸ່ມ, ສະມາຊິກ ແລະ ພະນັກງານກາແດງ ຈະສຸມທຸກເຫື່ອແຮງ ແລະ ຄວາມຫ້າວຫັນຂອງຕົນ ໂດຍໄດ້ຮັບການປຸກລະດົມ ບົນພື້ນຖານຄວາມສະໝັກໃຈຢ່າງສະໝ່ຳສະເໝີ.

ໂຄງປະກອບ, ລະບົບ ແລະ ລະບຽບຫຼັກການ ທາງດ້ານການບໍລິຫານ-ການເງິນ ຕ້ອງໄດ້ຮັບການປັບປຸງ ເພື່ອສ້າງຂີດຄວາມສາມາດ ໃນການຄຸ້ມຄອງການຈັດຕັ້ງປະຕິບັດວຽກງານຂອງຕົນ. ສິ່ງສຳຄັນຢ່າງຍິ່ງ, ອົງການກາແດງລາວຈະມີກິດຈະກຳຊອກຫາແຫລ່ງທຶນທີ່ມີປະສິດທິພາບ ແລະ ມີຄວາມຍືນຍົງ ໂດຍການສ້າງພາບພົດໃຫ້ເປັນໜ້າເຊື່ອຖື ແລະ ໃຫ້ການບໍລິການທີ່ມີປະສິດທິພາບ. ການຊອກຫາແຫລ່ງທຶນແບບຍືນຍົງແມ່ນຄວາມຈຳເປັນທີ່ສຸດຂອງອົງການກາແດງລາວ ໃນການສືບຕໍ່ສະໜັບສະໜູນກິດຈະກຳຂອງຕົນ. ການຜັນຂະຫຍາຍ ແຜນຍຸດທະສາດ ແລະ ສ້າງຂີດຄວາມສາມາດໃນການຈັດຕັ້ງປະຕິບັດ ຕ້ອງໄດ້ຜ່ານຂະບວນການການວາງແຜນການ, ການຕິດຕາມ, ການປະເມີນຜົນ ແລະ ລະບົບການລາຍງານ, ຊຶ່ງແມ່ນຄວາມຮັບຜິດຊອບພາຍໃນ

ອົງການກາແດງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ຈະຕ້ອງໄດ້ຮ່ວມກັນຜັນຂະຫຍາຍ ແລະ ເຮັດໃຫ້ມີຄວາມເຂັ້ມແຂງ.

ໃນຫ້າປີຕໍ່ໜ້າ, ອົງການກາແດງລາວ ຈະສືບຕໍ່ປັບປຸງເຮັດໃຫ້ແບບແຜນວິທີເຮັດວຽກ ແລະ ລະບົບຕ່າງໆຂອງຕົນ ມີຄວາມທັນສະໄໝຂຶ້ນ. ສິ່ງດັ່ງກ່າວນີ້ຈະຮັບປະກັນໃຫ້ ພື້ນຖານໂຄງລ່າງທັງໝົດໃນລະດັບສາຂາ ມີຄວາມພ້ອມໃນການສະໜອງການບໍລິການ ແລະ ການບໍລິຫານປະຈໍາວັນ. ນອກນັ້ນ ຍັງສາມາດຮັບປະກັນ ກ່ຽວກັບລະບົບ ແລະ ນະໂຍບາຍດ້ານການບໍລິຫານ, ການເຄື່ອນໄຫວໃນວຽກງານຄຸ້ມຄອງທີ່ດີ, ມີລະບົບການວາງແຜນ, ການຕິດຕາມກວດກາ, ການປະເມີນຜົນ ແລະ ການລາຍງານ, ໂດຍການນໍາໃຊ້ລະບົບການລາຍງານ ຂອງສະຫະພັນກາແດງ ຊຶ່ງແມ່ນຫນຶ່ງໃນຈໍານວນເຄື່ອງມື ແລະ ຮຽກຮ້ອງໃຫ້ມີນະໂຍບາຍທີ່ດີແກ່ອາສາສະໝັກ ແລະ ພະນັກງານ. ອົງການກາແດງລາວ ມີຄວາມຈໍາເປັນຕ້ອງພັດທະນາລະບົບ ການຊອກຫາແຫລ່ງທຶນແບບຍືນຍົງ ຈຶ່ງຈະສາມາດຕອບສະໜອງແຫລ່ງຊັບພະຍາກອນດ້ານການເງິນຢ່າງພຽງພໍ. ອົງການກາແດງລາວ ໄດ້ຈັດບຸລິມະສິດ ກ່ຽວກັບການພັດທະນາອົງການ ຊຶ່ງເປັນຂໍກຸນແຈພື້ນຖານ ໃນການສ້າງກາແດງແຫ່ງຊາດ ທີ່ເຄື່ອນໄຫວໄດ້ດີ. ບັນດາບຸລິມະສິດທີ່ກໍານົດໄວ້ນັ້ນ ແມ່ນການສ້າງຄວາມເຂັ້ມແຂງດ້ານຄວາມຮັບຜິດຊອບ ກ່ຽວກັບວຽກງານຄຸ້ມຄອງ-ບໍລິຫານຫ້ອງການ, ການພັດທະນາສາຂາ, ການພັດທະນາບຸກຄະລາກອນ (ນັບທັງຊາວໜຸ່ມ ແລະ ອາສາສະໝັກ), ການພັດທະນາຂີດຄວາມສາມາດ, ການພັດທະນາດ້ານການບໍລິຫານ-ການເງິນ, ຍຸດທະສາດ ໃນການລະດົມຊັບຍະພາກອນທີ່ດີ ແລະ ສ້າງໜ່ວຍງານການວາງແຜນ, ຕິດຕາມຊຸກຍູ້, ປະເມີນຜົນ ແລະ ລາຍງານ. **ອົງການກາແດງລາວ ຈະເປັນຜູ້ຊ່ວຍໜູນລັດຖະບານ ສປປ ລາວ ເພື່ອຮັບຮອງເອົາກົດໝາຍກາແດງ. ການຮັບຮອງດ້ານນິຕິກໍາ ແລະ ກົດໝາຍກາແດງ ຈະເຮັດໃຫ້ອົງການກາແດງລາວ ມີພາບພົດທີ່ດີຂື້ນ.**

## ວິທີການປະຕິບັດທີ 2: ສ້າງເພື່ອນຮ່ວມງານແລະການຮ່ວມມືທີ່ເຂັ້ມແຂງ



ທຸກວັນນີ້ ພວກເຮົາພົບບັນຫາສິ່ງທ້າທາຍຫຼາຍຢ່າງ ລວມທັງຄວາມຕ້ອງການອັນຮີບດ່ວນຂອງປະຊາຊົນຜູ້ດ້ອຍໂອກາດ ໃນ ສປປ ລາວ, ຊຶ່ງອົງການກາແດງລາວ ຈະບໍ່ສາມາດແກ້ໄຂໄດ້ ແຕ່ພຽງຜູ້ດຽວ. ມັນຈຶ່ງຮຽກຮ້ອງຕ້ອງການຄວາມຊ່ວຍເຫລືອ, ສະໜັບສະໜູນ ແລະ ຮ່ວມມືກັບທຸກພາກສ່ວນທີ່ກ່ຽວຂ້ອງ. ໃນນາມເປັນສະມາຊິກຜູ້ໜຶ່ງ ຂອງຂະບວນການກາແດງ ແລະ ເປັນພາກສ່ວນໜຶ່ງ ທີ່ຢູ່ໃນວົງຄະນາຍາດກາແດງແຫ່ງຊາດທັງໝົດ, ອົງການກາແດງລາວ ມີໜ້າທີ່ຮັບຜິດຊອບ ໃນການຈັດຕັ້ງປະຕິບັດແຜນຍຸດທະສາດ 2015 ເພື່ອກ້າວໄປສູ່ການປະກອບສ່ວນໃຫ່ແກ່ການຈັດຕັ້ງປະຕິບັດແຜນຍຸດທະສາດ ຂອງສະຫະພັນກາແດງ ປີ 2020. ການກາຍເປັນສະມາຊິກທີ່ຫ້າວຫັນຜູ້ໜຶ່ງ ຂອງຂະບວນການກາແດງ, ອົງການກາແດງລາວ ຈະຕ້ອງໄດ້ຂະຫຍາຍການເຂົ້າເຖິງ ແລະ ສະໜອງຄວາມຮຽກຮ້ອງຕ້ອງການ ທີ່ມີຜົນໄດ້ຮັບຢ່າງສູງສຸດແກ່ກຸ່ມຄົນ ແລະ ບັນດາປະຊາຊົນທີ່ມີຄວາມຕ້ອງການຮັບການຊ່ວຍເຫຼືອ. ຕ້ອງໄດ້ຊອກຫາທຸກວິທີທາງ ເພື່ອປ້ອງກັນ ແລະ ຫລຸດຜ່ອນຄວາມສ່ຽງ ໂດຍການນຳໃຊ້ພາລະບົດບາດຂອງຕົນໃນການເປັນຜູ້ຊ່ວຍໜູນລັດຖະບານຢ່າງເໝາະສົມ ແລະ ເຮັດໜ້າທີ່ຮ່ວມມື, ປະສານງານກັບອົງການຈັດຕັ້ງຂອງລັດ, ສະຫະພັນກາແດງ, ຄະນະກຳມະການກາແດງສາກົນ, ບັນດາກາແດງແຫ່ງຊາດ, ອົງການສະຫະປະຊາຊາດ ແລະ ອົງການຈັດຕັ້ງສາກົນອື່ນໆ.

**ພາຍໃຕ້ວິທີການປະຕິບັດທີ 2 ຂອງຂົງເຂດວຽກງານຫລັກທີ 4, ອົງການກາແດງລາວ ໄດ້ກຳນົດຈຸດປະສົງສະເພາະໄວ້ດັ່ງຕໍ່ໄປນີ້:**

1. *ເພື່ອ ປັບປຸງສາຍສຳພັນ ແລະ ການສື່ສານ ສຳລັບການປະສານງານ ແລະ ການຮ່ວມມືທີ່ດີກັບຄູ່ຮ່ວມງານ ເຊັ່ນ ລັດຖະບານລາວ, ອົງການສະຫະປະຊາຊາດ, ຂະບວນການກາແດງ, ບັນດາອົງການຈັດຕັ້ງສາກົນບໍ່ຂຶ້ນກັບລັດຖະບານ ແລະ ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ.*

***ພາຍໃນປີ 2015,*** ອົງການກາແດງລາວຈະເຮັດໜ້າທີ່ ບົດບາດໃນການຊ່ວຍໜູນລັດຖະບານ ຢ່າງມີປະສິດທິຜົນ ເພື່ອສະແດງໃຫ້ ພາກສ່ວນຕ່າງໆໃນສັງຄົມທົ່ວປະເທດ ເຫັນໄດ້ໃນການເຮັດ ວຽກງານດ້ານມະນຸດສະທຳ, ເພື່ອການປ້ອງກັນ ແລະ ຫລຸດຜ່ອນຄວາມສ່ຽງໄພ. ການຮ່ວມມື ແລະ ປະສານງານກັບລັດຖະບານ ສປປ ລາວ, ອົງການຈັດຕັ້ງພາຍໃນ ແລະ ສາກົນ, ການສື່ ສານພາຍໃນອົງການກາແດງລາວ ແລະ ກັບສາທາລະນະຊົນພາຍນອກ ພ້ອມທັງຜູ້ໄດ້ຮັບຜົນປະ ໂຫຍດ ແມ່ນບຸລິມະສິດທຳອິດທີ່ຈະຕ້ອງສ້າງໃຫ້ມີຄວາມເຂັ້ມແຂງ.

ໃນໄລຍະຫ້າປີຂ້າງໜ້າ, ອົງການກາແດງລາວ ຈະສຸມໃສ່ການສ້າງຄວາມເຂັ້ມແຂງດ້ານການພົວ ພັນ ແລະ ປຶກສາຫາລືກັບ ອົງການຈັດຕັ້ງມະຫາຊົນ ແລະ ອຳນາດການປົກຄອງຂັ້ນຕ່າງໆ ກ່ຽວກັບຄວາມສາມາດ ແລະ ຄວາມພ້ອມທີ່ມີຢູ່ຂອງເຂົາເຈົ້າ. ໃນນີ້ລວມທັງ ການປຶກສາຫາລື ບັນຫາຫຼັກກ່ຽວກັບວຽກງານມະນຸດສະທຳຂອງອົງການກາແດງລາວ, ການມີສ່ວນຮ່ວມທາງດ້ານ ຊັບພະຍາກອນ ເພື່ອການຊ່ວຍເຫຼືອຢູ່ພາຍໃນ ແລະ ພາຍນອກດ້ານວຽກງານການຫ້າງຫາກະ ກຽມ ແລະ ຕອບໂຕ້ໄພພິບັດ, ດ້ານວຽກງານສຸຂະພາບ ແລະ ຂົງເຂດວຽກງານອື່ນໆ ທີ່ຈຳເປັນ ໃນສັງຄົມ. ອົງການກາແດງລາວ ໂດຍສົມທົບກັບບັນດາອົງການຈັດຕັ້ງພາກລັດ ຈະດຳເນີນການ ທົບທວນດ້ານລະບຽບຫລັກການໃນການຮ່ວມມື ໃນຖານະທີ່ເປັນອົງການຊ່ວຍໜູນໜ່ວຍງານລັດ ເມື່ອເວລາໃດທີ່ເຫັນວ່າມີຄວາມຈຳເປັນ. ອົງການກາແດງລາວ ຈະເຊີນຊວນຜູ້ມີອຳນາດໃນການ ຕັດສິນບັນຫາ ມາຮ່ວມເຄື່ອນໄຫວວຽກງານນຳ ໃນທຸກເວລາທີ່ມີຄວາມຮຽກຮ້ອງຕ້ອງການ ເພື່ອ ຜົນປະໂຫຍດຂອງຊາຊົນຜູ້ດ້ອຍໂອກາດ ແລະ ນັບຖືຫລັກການພື້ນຖານຢ່າງເຕັມສ່ວນ. ອົງການ ກາແດງລາວ ຈະໄດ້ເຮັດວຽກຮ່ວມກັບບັນດາອົງການຈັດຕັ້ງຂອງລັດ ນັບທັງຢູ່ຂັ້ນສູນກາງ ແລະ ສາຂາແຂວງ ເພື່ອຊຸກຍູ້ເຂົາເຈົ້າໃນການປະຕິບັດ ແລະ ພ້ອມກັນຕັດສິນບັນຫາ ເພື່ອຜົນປະ ໂຫຍດ ແລະ ຄວາມຮຽກຮ້ອງຕ້ອງການຂອງປະຊາຊົນຜູ້ດ້ອຍໂອກາດ ແລະ ສ່ຽງໄພ. ອົງການ ກາແດງຈະຮັບປະກັນ ການພັດທະນາສາຍພົວພັນກັບມວນຊົນ ແລະ ຍຸດທະສາດດ້ານການສື່ ສານ ໂດຍມີເປົ້າໝາຍ ໃນການກະຈາຍຂໍ້ມູນພາບພົດ ແລະ ຄວາມເຂົ້າໃຈ ກ່ຽວກັບວຽກງານ ຂອງອົງການກາແດງລາວ ທັງຢູ່ໃນລະດັບທ້ອງຖິ່ນ, ລະດັບຊາດ ແລະ ລະດັບພາກພື້ນ.

ອົງການກາແດງລາວ ມີຄວາມຍິນດີ ໃຫ້ການຮ່ວມມືກັບ ຄູ່ຮ່ວມງານຈາກພາຍນອກ ໂດຍອີງ ຕາມຫລັກການພື້ນຖານຂອງສະຫະພັນກາແດງ. ການສ້າງຄວາມເຂັ້ມແຂງໃນການພົວພັນຮ່ວມມື ປະສານງານກັບສະຫະພັນກາແດງ ແລະ ຊີກວົງເດືອນແດງສາກົນ, ຄະນະກຳມະການກາແດງ ສາກົນ, ກາແດງຄູ່ຮ່ວມງານ, ອົງການສະຫະປະຊາຊາດ ແລະ ອົງການຈັດຕັ້ງສາກົນ ອື່ນໆ ແມ່ນຂອດກຸນແຈສຳຄັນ ໃນການເຮັດວຽກ ຢ່າງມີປະສິດທິພາບ ໃນນາມເປັນ ສະມາຊິກຂອງຂະ ບວນການກາແດງ, ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການ ຂອງອົງການກາແດງລາວ. ອົງການກາແດງລາວ ຍິນດີຮັບເອົາທຸກການສະໜັບສະໜູນ ຈາກເພື່ອນຮ່ວມອຸດົມການ, ອົງການ

ສະຫະປະຊາຊາດ ແລະ ພາກສ່ວນອື່ນໆ ໃນການຮ່ວມມືໄລຍະຍາວ ບົນພື້ນຖານຍຸດທະສາດປີ 2015 ແລະໃນຕໍ່ໜ້າ.

# ພາກສະຫຼຸບ

ແຜນການຍຸດທະສາດ (2011-2015) ແມ່ນວິໄສທັດທີ່ກວ້າງຂວາງ ແລະ ແມ່ນຄວາມຢາກໄດ້ ຢາກຈະເປັນສຳລັບອົງການກາແດງລາວໃນປີ 2015. ບັນດາຂົງເຂດວຽກງານບຸລິມະສິດຫລັກ ແລະ ເປົ້າໝາຍຍຸດທະສາດ ແມ່ນຖືກສ້າງຂື້ນເພື່ອໃຫ້ໄດ້ຖືກນຳໄປຈັດຕັ້ງປະຕິບັດ ໃຫ້ປະກົດຜົນ ເປັນຈິງ, ທັງໆທີ່ພວກເຮົາກໍຮັບຮູ້ຢູ່ແລ້ວ ວ່າມີສິ່ງທ້າທາຍຢູ່ຂ້າງໜ້າ. ເປົ້າໝາຍລວມ, ຈຸດປະສົງ ແລະ ບັນດາຄາດຄະເນຜົນໄດ້ຮັບຂອງອົງການກາແດງ ທີ່ວາງໄວ້ໃນໄລຍະຫ້າຫາສິບປີຕໍ່ໜ້າ ແມ່ນແທດເໝາະຕາມສະພາບຄວາມເປັນຈິງ ແລະ ສາມາດປະສົບຜົນສຳເລັດໄດ້. ການບັນລຸ ຜົນສຳເລັດດັ່ງກ່າວຂ້າງເທິງນີ້ ແມ່ນຮຽກຮ້ອງໃຫ້ຄະນະນຳ, ພະນັກງານ, ສະມາຊິກ, ອາສາ ສະໝັກ ແລະ ຊາວໜຸ່ມກາແດງ, ຕ້ອງມີຄວາມຕັດສິນໃຈສູງ ໃນການຈັດຕັ້ງປະຕິບັດ, ພ້ອມ ກັນນັ້ນ ກໍຮຽກຮ້ອງໃຫ້ມີຄວາມພ້ອມ ທາງດ້ານປະສົບປະການ ຄວາມຊຳນິຊຳນານ, ຊັບພະຍາ ກອນຕ່າງໆ, ການເຮັດວຽກເປັນທີມງານ, ການບໍລິຫານຈັດການທີ່ດີ ແລະ ການພັດທະນາ ແຜນການທີ່ຈະແຈ້ງ. ອົງການກາແດງລາວ ຕ້ອງໄດ້ສ້າງຕັ້ງຄະນະກຳມະການການວາງແຜນ ຊຶ່ງ ຈະເປັນຜູ້ຮັບຜິດຊອບ ໃນການຂຽນແຜນເບື້ອງຕົ້ນ. ແຜນດັ່ງກ່າວປະກອບດ້ວຍ: ບັນດາການ ຄາດຄະເນຜົນໄດ້ຮັບ, ບັນດາຕົວວັດແທກທີ່ ເຮົາຢາກໄດ້, ບັນດາກິດຈະກຳຫລັກ, ກຳນົດເວລາ, ບັນດາຊັບພະຍາກອນທີ່ຕ້ອງການ ແລະ ມີເຄື່ອງມືໃນການກວດກາຕິດຕາມປະເມີນຜົນ.

ການສ້າງຄວາມເຂັ້ມແຂງ ດ້ານການພົວພັນຮ່ວມມື ແລະ ປະສານງານ ກັບສະຫະພັນກາແດງ, ຄະນະກຳມະການກາແດງສາກົນ, ກາແດງຄູ່ຮ່ວມງານ, ອົງການຈັດຕັ້ງພາກລັດ, ອົງການສະຫະ ປະຊາຊາດ, ອົງການຈັດຕັ້ງສາກົນອື່ນໆ, ອົງການຈັດຕັ້ງທີ່ບໍ່ຂື້ນກັບລັດຖະບານ, ພາກສ່ວນທຸລະ ກິດເອກະຊົນ ແລະ ເພື່ອນຮ່ວມງານອື່ນໆ ແມ່ນຄວາມຈຳເປັນພື້ນຖານ. ດ້ວຍຄວາມຊ່ວຍເຫລືອ ແລະ ສະໜັບສະໜູນຈາກເພື່ອນຮ່ວມງານ ແລະ ຜູ້ໃຫ້ທຶນເຫລົ່ານັ້ນ ອົງການກາແດງລາວ ມີ ຄວາມມຸ້ງຫວັງຕັ້ງໃຈ ທີ່ຈະກາຍເປັນອົງການທີ່ເຂັ້ມແຂງ ແລະ ນຳໜ້າ ໃນການຕອບສະໜອງ ການບໍລິການດ້ານມະນຸດສະທຳໃນ ສປປ ລາວ. ບ່ອນໃດທີ່ມີຜູ້ປະສົບເຄາະຮ້າຍ, ຄະນະນຳ, ພະນັກງານ, ສະມາຊິກ, ອາສາສະໝັກ ແລະ ຊາວໜຸ່ມກາແດງ, ຈະຕ້ອງເຮັດວຽກຢ່າງໜັກ ເພື່ອ **"ຊີວິດທີ່ປອດໄພ"** ຂອງປະຊາຊົນຜູ້ດ້ອຍໂອກາດ ແລະ **"ປ່ຽນແປງທັດສະນະຄະຕິ"** ໃນ ຕົວຂອງພວກເຮົາທັງໝົດ.

ການຈັດຕັ້ງປະຕິບັດຍຸດທະສາດສະບັບນີ້ ແມ່ນຂຶ້ນຢູ່ກັບວ່າ ຕ້ອງມີຊັບພະຍາກອນຕ່າງໆ ຢ່າງພຽງພໍ, ອົງການກາແດງລາວ ຈະຮັບປະກັນເຮັດແນວໃດໃຫ້ມີຊັບພະຍາກອນ ທີ່ພຽງພໍໃນໄລຍະຍາວ, ເພື່ອເຮັດໃຫ້ຍຸດທະສາດສຳລັບການບໍລິການສະບັບນີ້ ມີປະສິດທິຜົນ ແລະ ມີຄວາມຍືນຍົງ. ແຜນຍຸດທະສາດສະບັບນີ້ ແມ່ນເປັນພື້ນຖານເພື່ອນຳໃຊ້ໃນການປຶກສາຫາລືກັບລັດຖະບານ ສປປ ລາວ, ສະຫະພັນກາແດງ, ຄະນະກຳມະການກາແດງສາກົນ, ກາແດງຄູ່ຮ່ວມງານ ແລະ ເພື່ອນຮ່ວມງານ ແລະ ບັນດາຜູ້ໃຫ້ທຶນອື່ນໆ ເພື່ອຊອກຫາການສະໜັບສະໜູນທາງດ້ານການເງິນຈາກເຂົາເຈົ້າ.

ໃນໄລຍະຫ້າປີຕໍ່ໜ້າ, ພວກເຮົາຈະສາມາດລາຍງານ ຕໍ່ ລັດຖະບານ ສປປ ລາວ, ສະຫະພັນກາແດງ, ຄະນະກຳມະການກາແດງສາກົນ, ກາແດງຄູ່ຮ່ວມງານ ແລະ ຜູ້ໃຫ້ທຶນອື່ນໆ, ກ່ຽວກັບຜົນສຳເລັດໃນການຈັດຕັ້ງປະຕິບັດ ແລະ ປະສິດທິພາບ ຈາກການຕິດຕາມກວດກາການບັນລຸຈຸດປະສົງ, ການປະເມີນດ້ານຜົນກະທົບຕ່າງໆ ແລະ ກິດຈະກຳ ທີ່ຕ້ອງເຮັດໃນອານາຄົດ, ເພື່ອຮັບປະກັນວ່າ ອົງການກາແດງລາວໄດ້ຮັບຜົນສຳເລັດຕາມເປົ້າໝາຍຍຸດທະສາດທີ່ວາງໄວ້, ທັງເປັນສິ່ງຢັ້ງຢືນວ່າ ບັນດາຂົງເຂດວຽກງານຫຼັກ ທີ່ວາງໄວ້ນັ້ນ ໄດ້ຖືກຈັດຕັ້ງປະຕິບັດໃຫ້ປະສົບຜົນເປັນຈິງ.

ການພັດທະນາລະບົບການຕິດຕາມກວດກາ, ການປະເມີນຜົນ ແລະ ການລາຍງານ ຢ່າງເປັນປົກກະຕິ ຈະເຮັດໃຫ້ສາມາດວັດແທກໄດ້ກ່ຽວກັບຄວາມຄືບໜ້າດ້ານການບໍລິການ. ຍຸດທະສາດນີ້ ມີເປົ້າໝາຍທີ່ຈະດຳເນີນການ ທົບທວນຄືນ ໃນເດືອນຕຸລາ (10) 2015. ແລະ ການຮ່າງແຜນຍຸດທະສາດສະບັບໃໝ່ ສຳລັບປີ 2016-2020 ແມ່ນຈະເລີ້ມ ໃນເດືອນພະຈິກ (11) 2015.

# Annex A: ແຜນວາດ ຍຸດທະສາດ ຂອງອົງການກາແດງລາວ (2011-2015)

## ວິໄສທັດ

ນຳໜ້າໃຫ້ການບໍລິການດ້ານມະນຸດສະທຳເພື່ອຮັບປະກັນ
ຊີວິດການເປັນຢູ່ຂອງຊາຊົນຜູ້ສ່ຽງໄພໃຫ້ມີກຽດສັກສີ.

## ພາລະກິດ

ໃນຖານະທີ່ເປັນອົງການຊ່ວຍໜູນລັດຖະບານທີ່ໄດ້ຮັບມອບໝາຍໃນການບໍລິການດ້ານມະນຸດສະທຳ, ອົງການກາແດງລາວມີເປົ້າໝາຍເພື່ອຊ່ວຍເຫລືອປະຊາຊົນຜູ້ສ່ຽງໄພສູງກວ່າໝູ່ໃຫ້ທັນເວລາກັບຄວາມຕ້ອງການຂອງເຂົາເຈົ້າ.

### <u>ເປົ້າໝາຍຍຸດທະສາດ 1:</u>

ໃຫ້ການຊ່ວຍເຫລືອປະຊາຊົນຜູ້ສ່ຽງໄພໃນເວລາເກີດອຸບັດຕິໄພແລະສະໜັບສະໜູນເຂົາເຈົ້າໃນການສ້າງຊຸມຊົນປອດໄພ ແລະ ມີການຟື້ນຟູດີຂື້ນ.

**ຂົງເຂດວຽກງານຫລັກທີ 1:**
ການຄູ້ມ ຄອງດ້ານອຸບັດຕິໄພ

### <u>ເປົ້າໝາຍຍຸດທະສາດ 2:</u>

ປະກອບສວ່ນໃນການເຂົ້າເຖິງການບໍລິກາດ້ານສຸຂະພາບ, ສົ່ງເສີມຊີວິດທີ່ປອດໄພ ແລະ ຮັບມືກັບສຸຂະພາບໃນພາວະສຸກເສີນ

**ຂົງເຂດວຽກງານຫລັກທີ 2:**
ສົ່ງເສີມສຸຂະພາບຊຸມຊົນ

### <u>ເປົ້າໝາຍຍຸດທະສາດ 3:</u>

ສົ່ງເສີມຫລັກການພື້ນຖານ, ກົດໝາຍມະນຸດສະທຳສາກົນ, ແລະ ລວມທັງຄຸນຄ່າດ້ານມະນຸດສະທຳ

**ຂົງເຂດວຽກງານຫລັກທີ 3:**
ໂຄສະນາສົ່ງ ເສີມຫລັກການພື້ນຖານຂອງຂະບວນ ການເຄື່ອນໄຫວແລະຄຸນຄ່າດ້ານມະ ນຸດສະທຳ

### <u>ເປົ້າໝາຍຍຸດທະສາດ 4:</u>

ສ້າງຄວາມເຂັ້ມແຂງໃຫ້ແກ່ອົງການກາແດງລາວໃນຖານະເປັນອົງການນຳໜ້າດ້ານມະນຸດສະທຳແລະເປັນອົງການກາແດງທີ່ເຄື່ອນໄຫວໄດ້ດີ

**ຂົງເຂດວຽກງານຫລັກທີ 4:**
ພັດທະນາອົງກອນແລະສ້າງຄວາມເຂັ້ມແຂງໃຫ້ແກ່ກາແດງແຫ່ງຊາດ

**ວິທີການປະຕິບັດ 1:** ສ້າງກາແດງແຫ່ງຊາດໃຫ້ເຄື່ອນໄຫວໄດ້ດີ.

**ວິທີການປະຕິບັດ 2:** ສ້າງເພື່ອນຮ່ວມງານ ແລະ ສ້າງຄວາມເຂັ້ມແຂງໃນການຮ່ວມມື.

# ຄຳສັບຫຍໍ້

| | | |
|---|---|---|
| LRC | Lao Red Cross | ອົງການກາແດງລາວ |
| ICRC | International Committee for the Red Cross | ຄະນະກຳມະການກາແດງສາກົນ |
| IFRC | International Federation of the Red Cross & Red Crescent Societies (referred to as the 'International Federation') | ສະຫະພັນກາແດງ ແລະຊີກວົງເດືອນແດງສາກົນ |
| IHL | International Humanitarian Law | ກົດໝາຍມະນຸດສະທຳສາກົນ |
| MDG | Millennium Development Goals | ເປົ້າໝາຍສະຫະສະວັດເພື່ອການພັດທະນາ |
| Movement | International Red Cross and Red Crescent Movement Partners | ຄູ່ຮ່ວມງານ ຂອງຂະບວນການກາແດງແລະຊີກວົງເດືອນແດງ |
| NGO | Non-Governmental Organization | ອົງການຈັດຕັ້ງບໍ່ສັງກັດລັດຖະບານ |
| NS | National Society | ກາແດງແຫ່ງຊາດ |
| PNSs | Participating National Societies | ກາແດງເພື່ອນມິດ |
| PDR | People's Democratic Republic | ສາທາລະນະລັດປະຊາທິປະໄຕປະຊາຊົນ |
| UN | United Nations | ອົງການສະຫະປະຊາຊາດ |

# ເອກະສານອ້າງອີງ


1. ຍຸດທະສາດປີ 2020 ຂອງສະຫະພັນກາແດງ.
2. ເປົ້າໝາຍສະຫະສະວັດເພື່ອການພັດທະນາ.
3. ແຜນຍຸດທະສາດ ປີ 2006-2010 ຂອງອົງການກາແດງລາວ.
4. ແຜນຍຸດທະສາດ ເລືອດປອດໄພແຫ່ງຊາດ 2009-2013.
5. ແຜນຍຸດທະສາດ ການຫຼຸດຜ່ອນໄພພິບັດສາກົນ, ແຜນປະຕິບັດງານ ຮີໂອໂກ 2005-2015, ເພື່ອສ້າງໃຫ້ຊຸມຊົນ ແລະ ປະຊາຊາດ ສາມາດຮັບມືກັບໄພພິບັດ ແລະ ຟື້ນຟູຊີວິດການເປັນຢູ່ດີຂຶ້ນ.
6. ແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະບານ ຄັ້ງທີ 7 (2011-2015).
7. ຍຸດທະສາດ ແລະ ແຜນງານ ສຳລັບການເຊື່ອມສານແຜນນະໂຍບາຍຕໍ່ກັບການບໍລິການສາທາລະນະສຸກສຳລັບແມ່, ເດັກນ້ອຍເກີດໃໝ່ ແລະ ເດັກ (2009-2015).
8. ແຜນພັດທະນາຂະແໜງສາທາລະນະສຸກ 5 ປີ ຄັ້ງທີ 7 (2011-2015).
9. ບັນດາແຜນງານ ແລະໂຄງການຂອງບັນດາກາແດງເພື່ອນມິດ

# ອະທິບາຍຄຳສັບ

## Changing minds - ການປ່ຽນແປງທັດສະນະຄະຕິ.

***ໝາຍຄວາມວ່າ:*** ການປ່ຽນແປງທັດສະນະຄະຕິ ຊຶ່ງບໍ່ພຽງແຕ່ ເພື່ອໃຫ້ການຊ່ວຍເຫຼືອດ້ານມະນຸດສະທຳແກ່ກຸ່ມຄົນຜູ້ສ່ຽງໄພສູງເທົ່ານັ້ນ ແຕ່ຍັງລວມທັງແມ່ນ ການປ່ຽນແປງທັດສະນະຄະຕິຂອງປວງຊົນທັງໝົດໃນສັງຄົມ ເພື່ອຮ່ວມກັນເຮັດວຽກງານມະນຸດສະທຳ.

ແມ່ນການປ່ຽນແປງ ວິທີການດຳລົງຊີວິດ, ວິທີການທີ່ພວກເຮົາ ກຳລັງດຳເນີນວຽກງານ ກ່ຽວກັບກິດຈະການດ້ານວຽກງານມະນຸດສະທຳ. ເປົ້າໝາຍຂອງພວກເຮົາ ແມ່ນເພື່ອແນໃສ່ການປ່ຽນແປງທັດສະນະຄະຕິ ຂອງພວກເຮົາທັງໝົດ. ບັນດາວຽກງານຂອງກາແດງ ເພື່ອປ່ຽນແປງທັດສະນະຄະຕິ ເຊັ່ນ ບັນດາໂຄງການ ການສົ່ງເສີມການດຳລົງຊີວິດ ແລະ ວິທີການອື່ນໆ.

## Do more, do better, and reach further - ເຮັດວຽກງານຫຼາຍຂຶ້ນ, ເຮັດໃຫ້ດີຂຶ້ນ ແລະ ກ້າວໄປເຖິງອານາຄົດທີ່ສົດໄສ.

***ໝາຍເຖິງ :*** ການປຸກລະດົມຂົນຂວາຍ ບັນດາກາແດງແຫ່ງຊາດທັງໝົດ ພ້ອມທັງ ບັນດາຊາວໜຸ່ມ, ອາສາສະໝັກ ແລະ ສະມາຊິກກາແດງ ເພື່ອໃຫ້ມີການເຮັດວຽກຫຼາຍຂຶ້ນ ທັງໃຫ້ສາມາດຮັບປະ ກັນໄດ້ວ່າ ທຸກໆການບໍລິການຕ້ອງມີຜົນຮັບທີ່ມີຄຸນນະພາບ, ປະສິດທິພາບ ແລະປະສິດທິຜົນ ສູງ, ເພື່ອກ້າວໄປເຖິງ ໃຫ້ສາມາດຕອບສະໜອງໄດ້ ຕາມຄວາມຕ້ອງການຂອງກຸ່ມຄົນຜູ້ສ່ຽງໄພສູງ.

## Expected results – ຄາດຄະເນຜົນໄດ້ຮັບ

ຈະໄດ້ກຳນົດເອົາ ບັນດາໝາກຜົນທີ່ໄດ້ຮັບ ແລະ ຜົນທີ່ປາກົດອອກມາໃນນີ້ ລວມທັງຜົນກະທົບຕ່າງໆ.

## Saving lives – ຊີວິດທີ່ປອດໄພ

***ໝາຍເຖິງ :*** ໜ້າທີ່ທີ່ໄດ້ຮັບມອບໝາຍຂອງບັນດາກາແດງແຫ່ງຊາດ ໃນການປ້ອງກັນໄພອັນຕະລາຍຕ່າງໆ ພ້ອມທັງປົກປ້ອງ ແລະ ກອບກູ້ຊີວິດ ຂອງປະຊາຊົນຜູ້ສ່ຽງໄພສູງ, ຄຸ້ມຄອງຊີວິດຂອງເຂົາເຈົ້າ ຈາກໄພພິບັດທຳມະຊາດ ແລະ ມະນຸດສ້າງຂຶ້ນ ພ້ອມທັງບັນດາວິກິດການຕ່າງໆ.

## Strategic aim - ເປົ້າໝາຍຍຸດທະສາດ

ແມ່ນເປົ້າໝາຍ ທີ່ກໍານົດທິດທາງ ຍຸດທະສາດລວມ, ຊຶ່ງບັນດາອົງການຈັດຕັ້ງ ຕ້ອງໄດ້ປະຕິບັດຕາມ ເພື່ອໃຫ້ສໍາເລັດຕາມພາລະໜ້າທີ່ ທີ່ກໍານົດໄວ້.

## Strategy – ຍຸດທະສາດ

ແມ່ນບັນດາທິດທາງ ແລະຂອບເຂດ ທີ່ວາງໄວ້ໃນໄລຍະຍາວ ຂອງບັນດາອົງການຈັດຕັ້ງໃດໜຶ່ງ, ຊຶ່ງແມ່ນກາລະໂອກາດຂອງອົງການຈັດຕັ້ງນັ້ນ ຈະສາມາດປະຕິບັດວຽກງານ ໃຫ້ປະສິບຜົນສໍາເລັດ, ໂດຍການ ຈັດສັນບັນດາຊັບພະຍາກອນຕ່າງໆ ທີ່ຢູ່ພາຍໃນສະພາບສິ່ງແວດລ້ອມທີ່ມີຄວາມທ້າທາຍ, ເພື່ອໃຫ້ສາມາດຕອບສະໜອງໄດ້ ຕາມຄວາມຮຽກຮ້ອງຕ້ອງການຂອງກຸ່ມຄົນທີ່ສ່ຽງໄພສູງ ແລະ ທັງສາມາດເຮັດວຽກງານໃຫ້ປະສິບຜົນສໍາເລັດ ຕາມຄວາມຄາດຫວັງຂອງບັນດາຄູ່ຮ່ວມງານຕ່າງໆ.

## Vulnerability – ຄວາມດ້ອຍໂອກາດ ຫຼື ຄວາມສ່ຽງໄພ

ແມ່ນບັນດາເງື່ອນໄຂ ທີ່ກໍານົດປັດໄຈດ້ານວັດຖຸ, ສັງຄົມ, ເສດຖະກິດ ແລະ ສະພາບແວດລ້ອມ ຫຼື ບັນດາຂະບວນການຕ່າງໆ ທີ່ເຮັດໃຫ້ມີການເພີ່ມທະວີຄວາມອ່ອນແອຕໍ່ຊຸມຊົນໃດນຶ່ງ ຊຶ່ງນໍາໄປເຖິງຜົນກະທົບ ແລະ ໄພອັນຕະລາຍຕ່າງໆ.

# ຫຼັກການພື້ນຖານ

## ຂອງຂະບວນການກາແດງ ແລະ ຊີກວົງເດືອນແດງສາກົນ

- **ຄວາມມີມະນຸດສະທຳ (Humanity)**

  ຂະບວນການກາແດງຖືກຳເນີດມາ ມີມານະຈິດໃນການຊ່ວຍເຫຼືອ ໂດຍບໍ່ມີການຈຳແນກຕໍ່ຜູ້ບາດເຈັບໃນສະໜາມຮົບ, ມີຄວາມມານະອົດທົນ, ມີຄວາມສາມາດ ໃນລະດັບກາແດງແຫ່ງຊາດ ແລະ ຂະບວນການກາແດງສາກົນ, ເພື່ອປົກປ້ອງ ແລະ ຫຼຸດຜ່ອນຄວາມເຈັບປວດທໍລະມານ ໃນຂະນະທີ່ພົບເຫັນ. ເປົ້າໝາຍສູງສຸດ ແມ່ນເພື່ອປົກປ້ອງຊີວິດ ແລະ ສຸຂະພາບ ພ້ອມທັງຮັບປະກັນການເຄົາລົບນັບຖືເພື່ອນມະນຸດ. ສົ່ງເສີມຄວາມເຂົ້າໃຈຊຶ່ງກັນ ແລະ ກັນ, ມິດຕະພາບ, ການຮ່ວມມື ແລະ ສັນຕິພາບໃນໝູ່ປະຊາຊົນ.

- **ຄວາມບໍ່ລຳອຽງ (Impartiality)**

  ຂະບວນການກາແດງ ບໍ່ໄດ້ຈຳແນກເຊື້ອຊາດ, ຜິວພັນ, ຄວາມເຊື່ອຖືສາດສະໜາ, ຊົນຊັ້ນ ແລະ ຄວາມຄິດເຫັນດ້ານການເມືອງ. ມີຄວາມມານະອົດທົນ ໃນການຊ່ວຍເຫຼືອ ແລະ ບັນເທົາຄວາມເຈັບປວດທໍລະມານຂອງເພື່ອນມະນຸດດ້ວຍກັນ, ຕາມຄວາມຕ້ອງການທີ່ຈຳເປັນຂອງເຂົາເຈົ້າ, ພ້ອມທັງຖືເອົາກໍລະນີບັນຫາໄພອັນຕະລາຍທີ່ຮີບດ່ວນທີ່ສຸດເປັນບຸລິມະສິດ.

- **ຄວາມເປັນກາງ (Neutrality)**

  ເພື່ອໃຫ້ເປັນທີ່ຍອມຮັບຂອງທຸກພາກສ່ວນ, ເວລາໃດກໍຕາມ ຂະບວນການກາແດງບໍ່ເຂົ້າຂ້າງຝ່າຍໃດຝ່າຍນຶ່ງ, ບໍ່ເຂົ້າໄປມີສ່ວນຮ່ວມໃນການຂັດແຍ່ງທາງດ້ານການເມືອງ, ເຊື້ອຊາດ, ສາດສະໜາ ຫຼື ອຸດົມການທີ່ແຕກຕ່າງກັນ.

- **ຄວາມເປັນອິດສະຫຼະ (Independence)**

  ຂະບວນການກາແດງ ມີຄວາມເປັນອິດສະຫຼະພາບ. ກາແດງແຫ່ງຊາດ ໃນແຕ່ລະປະເທດ, ເປັນອົງການຊ່ວຍໜູນລັດຖະບານ ໃນການໃຫ້ການບໍລິການດ້ານມະນຸດສະທຳ ແລະ ປະຕິບັດຕາມລະບຽບກົດໝາຍ ແລະ ລະບຽບຫຼັກການຂອງປະເທດນັ້ນໆ ຊຶ່ງຈະຕ້ອງດຳລົງໄວ້ ຄວາມເປັນເອກະລັກສະເພາະຂອງຕົນເອງ ແລະ ມີຄວາມສາມາດ ດຳເນີນງານຂອງຕົນໃຫ້ສອດຄ່ອງຕາມ 7 ຫຼັກການ ພື້ນຖານຂອງຂະບວນການກາແດງສາກົນ.

- **ບໍລິການດ້ວຍຄວາມສະໝັກໃຈ (Voluntary service)**

  ແມ່ນຂະບວນການ ໃຫ້ການຊ່ວຍເຫຼືອດ້ວຍຄວາມສະໝັກໃຈ, ໂດຍບໍ່ຫວັງຜົນກຳໄລ ແລະ ບໍ່ຮຽກຮ້ອງສິ່ງຕອບແທນ.

- **ຄວາມເປັນເອກະພາບ (Unity)**

  ໃນປະເທດໃດນຶ່ງ ມີແຕ່ອົງການກາແດງ/ສະພາກາແດງ ຫຼື ອົງການຊີກວົງເດືອນແດງ/ສະພາຊີກວົງເດືອນແດງ ດຽວເທົ່ານັ້ນ, ຊຶ່ງເປັນອົງການ ທີ່ເປີດກວ້າງໃຫ້ທຸກຄົນປະກອບສ່ວນ ແລະ ເປັນອົງການ ທີ່ ດຳເນີນພາລະກິດດ້ານມະນຸດສະທຳບົນພື້ນແຜ່ນດິນອັນຄົບຖ້ວນຂອງຕົນ.

- **ຄວາມມີນ້ຳໃຈສາກົນ (Universality)**

  ຂະບວນການກາແດງ ຫຼື ຊີກວົງເດືອນແດງສາກົນ, ໃນນັ້ນບັນດາກາແດງແຫ່ງຊາດໃນທົ່ວໂລກ ມີຖານະ, ມີຄວາມສະເໝີພາບ ເທົ່າທຽມກັນ, ມີຄວມຮັບຜິດຊອບ ແລະ ພາລະໜ້າທີ່ ໃນການຊ່ວຍເຫຼືອຊຶ່ງກັນ ແລະ ກັນ.